ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ມິຖຸນາ 2025
ປີທີ 14
ສະບັບທີ 1022
ລາຍສັບປະດາ

## ຜົນສຳເລັດການພິຈາລະນາວຽກງານຂອງລັດຖະບານ



(ສພຊ) - ວັນທີ 16 ມິຖຸນານີ້, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະທານກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດການພິຈາລະນາວຽກງານຂອງລັດຖະບານໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ ແລະ ບົດລາຍງານການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງ

ອ່ານຕໍ່ໜ້າ 5

## ປັບປຸງລາຄາໄຟຟ້າ ໃຫ້ສອດຄ່ອງກັບການດຳລົງຊີວິດຂອງປະຊາຊົນ



(ສພຊ) - ທ່ານ ນາງ ປິ່ງຄຳ ລາຊະສົມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ ທີ່ສະເໜີໂດຍລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ ເຊິ່ງໄດ້ມີບາງຄຳເຫັນດັ່ງນີ້:

1. ກວດກາຄືນບັນດາໂຄງການລົງທຶນດ້ານພະລັງງານໄຟຟ້າ ທີ່ໄດ້ເຊັນສັນຍາສຳປະທານກັບລັດຖະບານ, ໂຄງການທີ່ຢູ່ໃນຂັ້ນຕອນການຂໍອະນຸມັດເຊັນສັນຍາສຳປະທານແລະເນື້ອ

ອ່ານຕໍ່ໜ້າ 7



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ມະຫາຊົນ ເປັນບໍ່ເກີດ, ເປັນບ່ອນອີງ, ເປັນກຳລັງແຮງຂອງພັກເຮົາ ການປະຕິວັດ ແມ່ນພາລະກິດຂອງມະຫາຊົນ, ພັກເຮົາແມ່ນພັກທີ່ເກີດຂຶ້ນ, ເຕີບໃຫຍ່ ໃນຂະບວນການຕໍ່ສູ້ຂອງປະຊາຊົນ, ຈາກປະຊາຊົນ ແລະ ເພື່ອປະຊາຊົນ; ພັກບໍ່ມີຈຸດປະສົງອື່ນໃດ ນອກຈາກການນຳເອົາຜົນປະໂຫຍດມາສູ່ປະຊາຊົນ.

(ບົດໂອ້ລົມຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າທີ 18)

ພະນັກງານແມ່ຍິງ ແມ່ນຖັນແຖວປະຈັນບານຂອງກຳລັງແມ່ຍິງ ຍິ່ງຂະຫຍາຍຕົວເທົ່າໃດ ຖັນແຖວຂອງພະນັກງານແມ່ຍິງກໍຍິ່ງມີເງື່ອນໄຂຂະຫຍາຍຕົວຢ່າງແຂງແຮງເທົ່ານັ້ນ.

(ປຶ້ມສັງລວມບົດໂອ້ລົມຕໍ່ຂັ້ນສູງກາງ, ໜ້າທີ 47)

ອ່ານຕໍ່ສະບັບໜ້າ

## ປີທ່ອງທ່ຽວລາວ 2024 ກະຈາຍລາຍຮັບຫຼາຍກວ່າ 1.77 ຕື້ໂດລາ



(ສພຊ) - ທ່ານ ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງວັດທະນະທຳແລະການທ່ອງທ່ຽວ ລາຍງານການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ 2024 ແລະ ທິດທາງແຜນການໃນຕໍ່ໜ້າ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ປີທ່ອງທ່ຽວລາວ 2024 ພາຍໃຕ້ຄຳຂວັນ: "ທ່ອງທ່ຽວລາວປອດໄພ, ຊື່ນໃຈໃນວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ" ປະກອບມີ 79 ກິດຈະກຳ ໂດຍແບ່ງອອກເປັນ 2 ລະດັບຄື: ກິດຈະກຳລະດັບຊາດ

ອ່ານຕໍ່ໜ້າ 5

## 143 ກົດໝາຍ ໄດ້ຮັບການໂຄສະນາເຜີຍແຜ່



(ສພຊ) - ທ່ານ ໄພວີ ສີບົວລີພາ ລັດຖະມົນຕີກະຊວງຍຸຕິທຳ ໄດ້ລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ພາຍຫຼັງປັບປຸງລັດຖະທຳມະນູນ ປີ 2015 ເປັນຕົ້ນມາ ເຫັນວ່າແຕ່ລະຂະແໜງການແຕ່ສູນກາງຮອດທ້ອງຖິ່ນ ໄດ້ຖືເອົາການໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ເພາະເປັນການໂຄສະນາເຜີຍແຜ

ອ່ານຕໍ່ໜ້າ 3

## ປະຕິຮູບລັດວິສາຫະກິດໄຟຟ້າລາວ ແລະ ບໍລິສັດລູກ ໃຫ້ມີຄວາມຄືບໜ້າໄວຂຶ້ນ



(ສພຊ) - ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ ໄດ້ລາຍງານການຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນ

ອ່ານຕໍ່ໜ້າ 6

## ຮອດປັດຈຸບັນ ຂຶ້ນທະບຽນອອກໃບຕາດິນ 2 ລ້ານກວ່າຕອນ ເທົ່າກັບ 70.4%



(ສພຊ)-ທ່ານຣສ.ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳແລະສິ່ງແວດລ້ອມ ໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງມີບາງຕອນສຳຄັນດັ່ງນີ້:

1. ການຊຸກຍູ້ສິ່ງເສີມ

ອ່ານຕໍ່ໜ້າ 6



ພູມແພ້ອາກາດ (ໜ້າ 8)



NOTICE OF DISSOLUTION OF THE LEGISLATIVE ASSEMBLY 2025

I, TUIMALEALIIFANO VAALETOA SUALAUVI II, Head of State of Samoa, acting on the Prime Minister's request and advice dated 27 May 2025 and pursuant to Article 33(2) (b) and 63(3) of the Constitution of the Independent State of Samoa 1960, HEREBY DISSOLVE the Legislative Assembly on:

3 June 2025

due to the Cabinet's inability to pass the Appropriation Bill 2025/2026 in its first reading stage in the Legislative Assembly. A question that was determined by the Prime Minister to be a question of confidence in her Cabinet.

At the commencement of the dissolution, the Prime Minister and Cabinet continues to have the general direction and control of the executive government of Samoa in a caretaker capacity, until the first session of the Legislative Assembly following dissolution.

GIVEN under my hand on this 28th day of MAY 2025.

(Tuimalealiifano Vaaletoa Sualauvi II)
HEAD OF STATE

ຜູ້ນຳລັດ... (ໜ້າ 9)




ເພື່ອສິດ... (ໜ້າ 11)

# 7 ຂໍ້ສະເໜີຕໍ່ລັດຖະບານ ກ່ຽວກັບນະໂຍບາຍ ຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອວັນທີ 12 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ເຊິ່ງໄດ້ຮັບຟັງການລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່ ຈາກລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ); ຈາກນັ້ນ, ທ່ານ ນາງ ປິ່ງຄໍາ ລາຊະສົມບັດ ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ໄດ້ຂຶ້ນປະກອບຄໍາເຫັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນສູງແລະຮັບປະກັນຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ໂດຍສະເໜີບາງຄໍາເຫັນຕໍ່ລັດຖະບານດັ່ງນີ້:

1. ຊີ້ນໍາກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງການເງິນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າອອກນິຕິກໍາ ກໍານົດຫຼັກການແຕ່ລະໜ້າວຽກໃຫ້ມີຄວາມລະອຽດ, ຊັດເຈນ ແລະ ຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ທຸກຂະແໜງການ ໃນການຄຸ້ມຄອງ ແລະຕິດຕາມກວດກາການຈັດຕັ້ງປະຕິບັດແຕ່ລະໂຄງການ.

2. ຈັດລຽງບຸລິມະສິດຂອງໂຄງການທີ່ຈະໄດ້ຮັບນະໂຍບາຍຊຸກຍູ້ສົ່ງເສີມ, ຈໍາກັດໂຄງການທີ່ເປັນເປົ້າໝາຍເຮັດທົດລອງ ໂດຍສະເພາະທາງຫຼວງແຫ່ງຊາດທີ່ເປ່ເພໜັກໜ່ວງ ແລະ ມີການຂົນສົ່ງໂດຍສານ ແລະ ສິນຄ້າຈໍານວນຫຼາຍ ອີງໃສ່ຄວາມສາມາດຕົວຈິງສະໜອງງົບປະມານຂອງລັດ; ພ້ອມກັນນັ້ນ, ກໍຊຸກຍູ້ສົ່ງເສີມໃຫ້ພາກທຸລະກິດເຂົ້າຮ່ວມໃນການຟື້ນຟູ ແລະ ສ້ອມແປງເສັ້ນທາງໃຫ້ກັບສູ່ສະພາບປົກກະຕິ, ພາຍຫຼັງຟື້ນຟູເສັ້ນທາງໃຫ້ການສັນຈອນໂລ່ງລ່ຽນແລ້ວ ຕ້ອງໄດ້ລະດົມໃຫ້ຜູ້ປະກອບການທີ່ນໍາໃຊ້ເສັ້ນທາງເຮັດການຂົນສົ່ງໂດຍສານ ແລະ ຂົນສົ່ງສິນຄ້າທີ່ມີນໍ້າໜັກ 12 ໂຕນຂຶ້ນໄປ ປະກອບສ່ວນເສຍຄ່າຜ່ານທາງຕາມອັດຕາທີ່ເໝາະສົມ ດ້ວຍວິທີການເກັບຄ່າຜ່ານທາງດ້ວຍລະບົບທັນສະໄໝ (ລັດເກັບ) ເພື່ອເຮັດໃຫ້ລັດມີລາຍຮັບ ແລະ ສະສົມທຶນໃນການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ໃຫ້ເຂົ້າສູ່ສະພາບປົກກະຕິ, ສ່ວນລົດບັນທຸກທີ່ໃຫ້ການບໍລິການສາທາລະນະ ແລະປະເພດລົດເບົາບໍ່ຄວນເກັບ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ການດໍາລົງຊີວິດຂອງປະຊາຊົນ.

3. ຊີ້ນໍາກະຊວງ ຍທຂ ສໍາຫຼວດເສັ້ນທາງສາຍຫຼັກຄືນທັງໝົດເພື່ອກໍານົດມາດຕະຖານເຕັກນິກ, ປັບປຸງໂຄງສ້າງທາງໃຫ້ຖືກຕ້ອງ ໂດຍເລັ່ງໃສ່ການນໍາໃຊ້ວັດສະດຸກໍ່ສ້າງທີ່ສາມາດຜະລິດ ແລະ ສະໜອງໄດ້ຢູ່ພາຍໃນໃຫ້ຫຼາຍຂຶ້ນ ເປັນຕົ້ນຊີມັງ, ເຫຼັກເສັ້ນ ເພື່ອເປັນການສົ່ງເສີມການຜະລິດພາຍໃນ, ທົດແທນການນໍາເຂົ້າແລະຫຼຸດຜ່ອນການນໍາເຂົ້າຢາງໝາກຕອຍຈໍານວນຫຼາຍ; ການກໍ່ສ້າງຕະຝັ່ງເຈື່ອນຕາມແຄມທາງ ແລະ ແຄມແມ່ນໍ້າກໍຕ້ອງໄດ້ທົບທວນການອອກແບບໃຫ້ເໝາະສົມ, ຄົ້ນຄວ້າການນໍາໃຊ້ວັດສະດຸພາຍໃນໃຫ້ຫຼາຍຂຶ້ນ, ໃຫ້ທົບທວນຄວາມຈໍາເປັນການນໍາໃຊ້ຕາໜ່າງຫີນ (Box & Mattress Gabion) ເພື່ອຮັບປະກັນບໍ່ໃຫ້ມູນຄ່າການກໍ່ສ້າງສູງເກີນກວ່າຄວາມຈໍາເປັນ.

4. ພິຈາລະນາຢ່າງຖີ່ຖ້ວນຕໍ່ບັນດາໂຄງການກໍ່ສ້າງ ແລະ ສ້ອມແປງທົ່ວໄປ ທີ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຕາມການແບ່ງຂັ້ນຄຸ້ມຄອງນັ້ນ ເຫັນວ່າມີຈໍານວນຫຼາຍ ແລະ ແຫຼ່ງທຶນຈາກການນໍາໃຊ້ງົບປະມານລົງທຶນຂອງລັດໃນແຕ່ລະປີ ຖ້າຈະປະຕິບັດນະໂຍບາຍໃໝ່ ຕ້ອງໄດ້ຄົ້ນຄວ້າຢ່າງຖີ່ຖ້ວນ, ກໍານົດກົນໄກທີ່ແນ່ນອນ ເພື່ອບໍ່ໃຫ້ເກີດຊ່ອງວ່າງ ທັງບໍ່ສ້າງຜົນກະທົບຮ້າຍແຮງຕໍ່ການເກັບລາຍຮັບປະຈໍາແຕ່ລະປີຂອງລັດຖະບານ; ສໍາລັບການໃຫ້ນະໂຍບາຍຕໍ່ການລົງທຶນການກໍ່ສ້າງທາງດ້ວຍທຶນຂອງພາກທຸລະກິດໃນຮູບແບບ BOT ຫຼື ຮູບແບບອື່ນ ຕາມທີ່ກໍານົດໄວ້ໃນມາດຕາ 11 ຂອງດໍາລັດວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ ສະບັບເລກທີ 624/ລບ, ລົງວັນທີ 21 ທັນວາ 2020 ສະເໜີໃຫ້ພິຈາລະນາຫຼຸດຜ່ອນ ຫຼື ຍົກເວັ້ນການປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ຕາມແຕ່ກໍລະນີ.

5. ຊີ້ນໍາກະຊວງການເງິນ ກໍານົດກົນໄກການຄຸ້ມຄອງແລະຕິດຕາມກວດກາການນໍາເຂົ້າວັດສະດຸກໍ່ສ້າງ ແລະ ກົນຈັກ ຢ່າງເຄັ່ງຄັດ ເພື່ອບໍ່ໃຫ້ມີການສວຍໃຊ້ໂອກາດ ແລະ ເປັນຊ່ອງວ່າງໃນການນໍາເຂົ້າວັດສະດຸ ແລະ ກົນຈັກ ມານໍາໃຊ້ບໍ່ຖືກຕ້ອງເປົ້າໝາຍ, ພາຍຫຼັງທີ່ໂຄງການກໍ່ສ້າງ ແລະ ສ້ອມແປງທາງ ຈັດຕັ້ງປະຕິບັດສໍາເລັດແລ້ວ ຕ້ອງມີການສະຫຼຸບ ແລະ ກວດກາຈໍານວນການນໍາເຂົ້າທີ່ນໍາໃຊ້ໃນໂຄງການຄືນໃໝ່ ຕາມນິຕິກໍາທີ່ກໍານົດຢ່າງລະອຽດ ແລະ ຈະແຈ້ງ.

6. ຄົ້ນຄວ້າພິຈາລະນາແບ່ງຄວາມຮັບຜິດຊອບໃຫ້ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມກວດກາພ້ອມທັງມີກົນໄກການປະສານງານຂອງຂະແໜງການດຽວກັນຫຼືຂະແໜງການທີ່ກ່ຽວຂ້ອງ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມກົມກຽວໄປລວງດຽວກັນ, ຫຼີກລ່ຽງບໍ່ໃຫ້ຖິ້ມຄວາມຮັບຜິດຊອບໃຫ້ກັນ.

7. ຕ້ອງມີມາດຕະການທີ່ເຂັ້ມງວດໃນການຄວບຄຸມຄຸນນະພາບ, ມາດຕະຖານເຕັກນິກການກໍ່ສ້າງແລະສ້ອມແປງເສັ້ນທາງ; ເຂັ້ມງວດການຄຸ້ມຄອງ ແລະກວດກາເສັ້ນທາງໃນການຂົນສົ່ງ, ປະເພດລົດບັນທຸກ, ນໍ້າໜັກລົດບັນທຸກ, ແລະມີຄວາມພ້ອມຮອບດ້ານໃນການປະຕິບັດມາດຕະການທີ່ເຂັ້ມງວດ ແລະ ເດັດຂາດຕໍ່ຜູ້ບັນທຸກນໍ້າໜັກເກີນ.

# ຍົກລະດັບເສັ້ນທາງຫຼວງແຫ່ງຊາດ ໃຫ້ຮັບນໍ້າໜັກໄດ້ 11 ໂຕນ/ເພົາ



(ສພຊ) - ວັນທີ 10 ມິຖຸນາຜ່ານມາ, ທ່ານ ງາມປະສົງ ເມືອງມະນີ ລັດຖະມົນຕີກະຊວງໂຍທາທິການແລະຂົນສົ່ງ(ຍທຂ) ໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີດັ່ງນີ້:

1. ຕາໜ່າງເສັ້ນທາງໃນປັດຈຸບັນສ່ວນຫຼາຍ ອອກແບບເພື່ອຮັບນໍ້າໜັກໄດ້ພຽງ 8.2 ແລະ 9.1 ໂຕນ/ເພົາ, ມີປະມານ 1 ພັນກິໂລແມັດ (ກມ) ເທົ່ານັ້ນ ຮັບນໍ້າໜັກໄດ້ 11 ໂຕນ/ເພົາ (ມາດຕະຖານອາຊຽນ); ປັດຈຸບັນທາງຫຼວງແຫ່ງຊາດ ມີຄວາມຍາວ 7,880 ກມ ໂດຍສະເພາະເສັ້ນທາງທີ່ເປັນທາງຫຼວງອາຊຽນ 2,855 ກມ ແມ່ນສືບຕໍ່ຍົກລະດັບໃຫ້ໄດ້ 11 ໂຕນ/ເພົາ. ສໍາລັບທິດທາງໃນຕໍ່ໜ້າ ໄດ້ມອບວຽກ ແລະ ງົບປະມານໃຫ້ພະແນກ ຍທຂ ແຂວງ-ນະຄອນຫຼວງ ເປັນຜູ້ປະຕິບັດວຽກສ້ອມແປງທາງຫຼວງແຫ່ງຊາດ ໂດຍສຸມໃສ່ 4 ແຂວງເຊັ່ນ: ວຽງຈັນ, ຫຼວງພະບາງ, ອຸດົມໄຊ ແລະ ຫຼວງນໍ້າທາ; ປັບປຸງກົນໄກການຄຸ້ມຄອງ ແລະ ນໍາໃຊ້ເສັ້ນທາງດ້ວຍຮູບແບບສັນຍາຟື້ນຟູ, ຍົກລະດັບ ແລະ ບູລະນະຮັກສາ ໃນໄລຍະຍາວ (10ປີ) ໂດຍພາກລັດເປັນຜູ້ເກັບເງິນຄ່າຜ່ານທາງ, ປັດຈຸບັນ ໄດ້ສໍາເລັດການເຊັນ MOU ກັບບໍລິສັດທີ່ກ່ຽວຂ້ອງ ເຮັດທົດລອງຢູ່ທາງເລກ 9 ແລະ ສຶກສາການເກັບເງິນຢູ່ທາງ 13 ໃຕ້ ດ້ວຍການເກັບເງິນສະເພາະລົດບັນທຸກທີ່ມີນໍ້າໜັກເກີນ 12 ໂຕນຂຶ້ນໄປ; ໃຫ້ບໍລິສັດຂຸດຄົ້ນ ແລະ ຜູ້ປະກອບການຂົນສົ່ງແຮ່ທາດ ມີພັນທະດ້ານງົບປະມານເຂົ້າໃນການຍົກລະດັບ, ສ້ອມແປງ ແລະ ບູລະນະຮັກສາເສັ້ນທາງ; ຂົນຂວາຍບໍລິສັດ ເພື່ອສ້າງອຸໂມງພູ 9 ຫຼັກ ແລະ ກວດການມາດຕະຖານເຕັກນິກ ແລະ ຄວາມປອດໄພ ໂດຍສະເພາະຢູ່ທາງເຂດພູດອຍ.

2. ການຄຸ້ມຄອງນໍ້າໜັກລົດບັນທຸກໃນຂອບເຂດທົ່ວປະເທດ ໄດ້ອອກນິຕິກໍາວ່າດ້ວຍການອະນຸມັດນໍ້າໜັກລວມສູງສຸດຂອງລົດບັນທຸກແລະພາລະບົດບາດຂອງໜ່ວຍງານສະຖານີຕິດຊັ່ງນໍ້າໜັກລົດບັນທຸກ; ເປີດນໍາໃຊ້ສະຖານີຕິດຊັ່ງນໍ້າໜັກ 24 ແຫ່ງ, ໃນປີ 2024 ຈັດຊື້ຊິງຊັ່ງເຄື່ອນທີ່ 20 ຊຸດ ໃຫ້ 18 ໂຄງການສ້ອມແປງທາງຫຼວງແຫ່ງຊາດ ແລະ ປັບປຸງ, ສ້ອມແປງສະຖານີຕິດຊັ່ງນໍ້າໜັກ 17 ແຫ່ງ ໃຫ້ສາມາດນໍາໃຊ້ໄດ້; ນອກນັ້ນ, ຍັງມີຊິງຢູ່ດ່ານສາກົນນາເພົ້າ, ນໍ້າພາວ, ໜອງແຮດ ແລະ ບໍ່ເຕັນ.

3. ການແກ້ໄຂບັນຫາທີ່ຍັງຄົງຄ້າງຂອງໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ມີ 66 ໜ້າວຽກ (ແກ້ໄຂສໍາເລັດ 50, ຍັງ 16) ໄດ້ສືບຕໍ່ແກ້ໄຂ ໃນນັ້ນ, ພາກສ່ວນກ່ຽວຂ້ອງລັດເປັນເຈົ້າການ 3 ວຽກ ແລະ ບໍລິສັດທາງລົດໄຟ ລາວ-ຈີນ ເປັນເຈົ້າການ 13 ວຽກ ເຊິ່ງມີລາຍລະອຽດດັ່ງນີ້:

- ການຊົດເຊີຍເວນຄືນທີ່ດິນ: ປະຊາຊົນຈໍານວນໜຶ່ງບໍ່ຍອມຮັບເອົາຄ່າຊົດເຊີຍ ຢູ່ 4 ແຂວງ (ຫຼວງນໍ້າທາ, ອຸດົມໄຊ, ວຽງຈັນ ແລະ ນະຄອນຫຼວງ) ລວມມີ 307 ຕອນດິນ ໃນນີ້, ຢູ່ນະຄອນຫຼວງວຽງຈັນ 279 ຕອນ; ສາເຫດແມ່ນບາງຄອບຄົວບໍ່ຍອມຮັບລາຄາຫົວໜ່ວຍການຊົດເຊີຍ ຫຼື ບໍ່ມາພົວພັນຮ່ວມເຮັດວຽກປະກອບເອກະສານໃນການຮັບເອົາເງິນຄ່າຊົດເຊີຍ ແລະ ບາງຕອນດິນບໍ່ສາມາດຕິດຕໍ່ພົວພັນເຈົ້າຂອງໄດ້.

- ການແກ້ໄຂບັນຫາຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນຕໍ່ເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງແຂວງ, ທາງຫຼວງທ້ອງຖິ່ນ, ທາງເຂົ້າສູ່ການຜະລິດ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕາມແລວທາງລົດໄຟ; ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ແຕ່ງຕັ້ງຄະນະແກ້ໄຂຂໍ້ຄົງຄ້າງ 5 ຝ່າຍ ໂດຍມີກະຊວງ ຍທຂ, ສະຖານທູດຈີນປະຈໍາລາວ, ຄະນະກໍາມະການຮ່ວມມືລາວ-ຈີນ, ອົງການກວດກາແຫ່ງລັດ ແລະ ບໍລິສັດທາງລົດໄຟ ລາວ-ຈີນ; ສັງລວມມີ 122 ບັນຫາ (ແກ້ໄຂ 70, ຍັງ 52) ບັນຫາທີ່ຍັງບໍ່ໄດ້ຮັບການແກ້ໄຂ, ພາກລັດທີ່ກ່ຽວຂ້ອງ ແລະ ບໍລິສັດທາງລົດໄຟ ລາວ-ຈີນ ຈະໄດ້ສົມທົບກັນແກ້ໄຂ.

4. ການແກ້ໄຂຜົນກະທົບທາງດ່ວນວຽງຈັນ-ວັງວຽງ ສາມາດສະຫຼຸບໄດ້ດັ່ງນີ້: 1) ທາງດ່ວນຕັດກັບທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ, ທາງເຂົ້າສູ່ເຂດທໍາການຜະລິດ ລວມມີ 90 ຈຸດ, ແກ້ໄຂແລ້ວ 86 ຈຸດ ແລະ ຍັງ 4 ຈຸດ; 2) ປັບປຸງປ້າຍສັນຍານຈະລາຈອນ, ເຄື່ອງໝາຍແນະນໍາ ແລະ ປ້າຍອື່ນໆ ຕາມທາງດ່ວນທີ່ບໍ່ຖືກຕ້ອງຕາມຫຼັກໄວຍາກອນຂອງພາສາລາວພ້ອມທັງຕິດຕັ້ງບໍ່ສອດຄ່ອງກັບສະຖານທີ່ຕົວຈິງ ມີ 118 ປ້າຍ, ແກ້ໄຂແລ້ວ 87 ປ້າຍ ແລະ ຍັງ 31 ປ້າຍ; 3) 13 ຕອນດິນທີ່ບໍ່ມີທາງເຂົ້າຢູ່ເມືອງນາຊາຍທອງ ໄດ້ແກ້ໄຂ 4 ຕອນ, ຍັງ 9 ຕອນ; 4) ໄຟແສງສະຫວ່າງໃນອຸໂມງກໍາລັງແກ້ໄຂ.



# ນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອວັນພະຫັດທີ 12 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ທ່ານ ງາມປະສົງ ເມືອງມະນີ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ໄດ້ລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່ ເຊິ່ງທ່ານໃຫ້ຮູ້ວ່າ: ໃນປັດຈຸບັນ, ການກໍ່ສ້າງ ແລະ ສ້ອມແປງທາງ ຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່; ຄຸນນະພາບຂອງທາງໃນການເຊື່ອມໂຍງ-ເຊື່ອມຈອດພາຍໃນ ແລະ ພາກພື້ນ, ຖ້າສົມທຽບໃສ່ບັນດາປະເທດເພື່ອນບ້ານ ຍັງບໍ່ທັນພັດທະນາໄດ້ດີເທົ່າທີ່ຄວນ ແລະ ສັງຄົມກໍໃຫ້ຄວາມສົນໃຈຫຼາຍ. ດັ່ງນັ້ນ, ເພື່ອເລັ່ງການກໍ່ສ້າງ, ຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງເສັ້ນທາງໃຫ້ໄດ້ໄວ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າ ລັດຖະບານໄດ້ລົງເລິກຄົ້ນຄວ້າ: 1) ນະໂຍບາຍພາສີ-ອາກອນ ແລະ ນະໂຍບາຍອື່ນໆທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ຕົ້ນທຶນກໍ່ສ້າງທາງຫຼຸດລົງ; 2) ສຶກສາເບິ່ງຜົນກະທົບຕໍ່ການຈັດເກັບແຫຼ່ງລາຍຮັບງົບປະມານ ແລະ ດ້ານອື່ນໆ; 3) ຄົ້ນຄວ້າວິທີການແລະມາດຕະການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ,ສາມາດຕິດຕາມແລະກວດກາໄດ້.

ໃນໄລຍະຜ່ານມາ, ເຖິງວ່າລັດຖະບານໄດ້ພະຍາຍາມ ແລະ ສຸມໃສ່ຢ່າງຕັ້ງໜ້າ ໃນການພັດທະນາທາງຫຼວງ ແຕ່ເສັ້ນທາງເບຕົງ, ປູຢາງຂົ້ວ ແລະ ປູຢາງກວມເອົາພຽງແຕ່ 23.69% ຂອງລວງຍາວທັງໝົດ ສ່ວນທີ່ເຫຼືອ 76.25% ເປັນເສັ້ນທາງປູຫີນແຮ່ ແລະ ທາງດິນແດງ; ຂະນະດຽວກັນ, ທາງຫຼວງທີ່ສາມາດຮັບນໍ້າໜັກໄດ້ 11 ໂຕນ/ເພົາແມ່ນຍັງມີຄວາມຍາວໜ້ອຍຫຼາຍ. ສໍາລັບໄລຍະປີ 2026-2030ຕາມແຜນພັດທະນາຂອງຂະແໜງການ ຍທຂ ຈະສືບຕໍ່ສຸມໃສ່ການບູລະນະຮັກສາ, ສ້ອມແປງ ແລະ ປັບປຸງຍົກລະດັບບັນດາທາງຫຼວງແຫ່ງຊາດທີ່ເປັນເສັ້ນທາງຫຼວງອາຊຽນເພີ່ມຕື່ມ439 ກມ ທີ່ນອນໃນທາງຫຼວງແຫ່ງຊາດເລກ 2E ແລະ 2W (ຜົ້ງສາລີ, ອຸດົມໄຊແລະໄຊຍະບູລີ), ທາງເລກ 12 (ຄໍາມ່ວນ), ບາງຕອນທາງ 13 ໃຕ້ (ນະຄອນຫຼວງວຽງຈັນ ແລະ ບໍລິຄໍາໄຊ) ເພື່ອໃຫ້ສາມາດຮັບນໍ້າໜັກໄດ້ 11 ໂຕນ/ເພົາ ໂດຍໄດ້ສຸມໃສ່ລະດົມຂົນຂວາຍແຫຼ່ງທຶນຈາກບັນດາຄູ່ຮ່ວມພັດທະນາ (ODA) ແລະ ພາກເອກະຊົນ; ປັດຈຸບັນ, ມີວິສາຫະກິດຈໍານວນໜຶ່ງມີຄວາມສົນໃຈສະເໜີລົງທຶນຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດຈໍານວນໜຶ່ງ ເຊິ່ງຢູ່ໃນຂັ້ນຕອນການຄົ້ນຄວ້າ ແລະ ກະກຽມ ໂດຍຈະນໍາໃຊ້ຮູບແບບປະສົມປະສານສັນຍາຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງທາງເປັນເວລາຫຼາຍປີພ້ອມທັງພາກລັດເປັນຜູ້ເກັບເງິນເພື່ອຊໍາລະໃຫ້ຜູ້ຮັບເໝົາ ໂດຍກໍານົດການເກັບເງິນຈາກປະເພດພາຫະນະທີ່ກໍານົດໄວ້.

ກະຊວງ ຍທຂ ສົມທົບກັບພາກສ່ວນກ່ຽວຂ້ອງ ໄດ້ຄົ້ນຄວ້າເປັນເອກະພາບນໍາສະເໜີເພື່ອໃຫ້ ສພຊ ພິຈາລະນາກໍາລະນີມີການຫຼຸດຜ່ອນບັນດາພາສີ, ອາກອນ ແລະ ພັນທະຕ່າງໆ ເຊັ່ນ: ພາສີ, ອາກອນນໍາເຂົ້າຂອງວັດສະດຸກໍ່ສ້າງ ແລະ ກົນຈັກ; ອາກອນມູນຄ່າເພີ່ມຂອງໂຄງການແລະຄ່າຊັບພະຍາກອນທໍາມະຊາດ ເຊິ່ງຈະເຮັດໃຫ້ມູນຄ່າຂອງໂຄງການຫຼຸດລົງໂດຍປະມານ 17.43% (ການຄິດໄລ່ຂຶ້ນກັບທີ່ຕັ້ງ, ພື້ນທີ່, ລາຍການໜ້າວຽກຂອງໂຄງການ)ສໍາລັບພາສີ, ອາກອນນໍາເຂົ້ານໍ້າມັນເຊື້ອໄຟແມ່ນບໍ່ໄດ້ຫຼຸດຜ່ອນການປະຕິບັດບາງມາດຕາຂອງກົດໝາຍ.

ພາຍຫຼັງໄດ້ຮັບການພິຈາລະນາຮັບຮອງຈາກ ສພຊ, ລັດຖະບານຈະກໍານົດກົນໄກ ແລະ ວິທີການຈັດຕັ້ງປະຕິບັດໃນການເຮັດທົດລອງໃນໄລຍະ 2-3 ປີ, ຈາກນັ້ນ ຈະປະເມີນຄືນເພື່ອເປັນພື້ນຖານໃນການປັບປຸງ ຫຼື ສ້າງນິຕິກໍາຕ່າງໆ; ການປະຕິບັດໂຄງການແມ່ນເຮັດເປັນຮູບແບບປະສົມປະສານສັນຍາຟື້ນຟູ, ຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງທາງເປັນເວລາຫຼາຍປີແລະການເກັບຄ່າຜ່ານທາງຕາມເສັ້ນທາງດັ່ງກ່າວ ໂດຍແມ່ນພາກລັດເປັນຜູ້ເກັບຄ່າຜ່ານທາງເຂົ້າກອງທຶນທາງ ເພື່ອນໍາໃຊ້ເຂົ້າໃນການບູລະນະຮັກສາ, ສ້ອມແປງ ແລະ ຕໍ່ອາຍຸເສັ້ນທາງນັ້ນ; ຈັດລຽງບຸລິມະສິດຂອງໂຄງການທີ່ຈະໄດ້ຮັບນະໂຍບາຍຊຸກຍູ້ສົ່ງເສີມ, ເລືອກເອົາໂຄງການທີ່ເປັນເປົ້າໝາຍເຮັດທົດລອງ ໂດຍສະເພາະແມ່ນທາງຫຼວງແຫ່ງຊາດທີ່ມີການເປ່ເພໜັກໜ່ວງ, ມີການຂົນສົ່ງໂດຍສານ ແລະ ສິນຄ້າຈໍານວນຫຼາຍ ເພື່ອດໍາເນີນການຟື້ນຟູ, ຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງ; ສໍາລັບໂຄງການລົງທຶນໃນຮູບແບບ BOT ທີ່ຈະໄດ້ຮັບນະໂຍບາຍຊຸກຍູ້ສົ່ງເສີມ ເພື່ອຫຼຸດຜ່ອນການປະຕິບັດບາງມາດຕາຂອງກົດໝາຍ, ສະເໜີພິຈາລະນາເປັນແຕ່ລະກໍລະນີສະເພາະຂອງແຕ່ລະໂຄງການ; ດໍາເນີນການສໍາຫຼວດອອກແບບ, ເກັບກໍາຂໍ້ມູນ, ປະເມີນມູນຄ່າ ແລະດໍາເນີນການຈັດຊື້-ຈັດຈ້າງເອົາບໍລິສັດຜູ້ຮັບເໝົາກໍ່ສ້າງທີ່ມີເງື່ອນໄຂ ແລະ ທີ່ປຶກສາ ເຂົ້າມາຈັດຕັ້ງປະຕິບັດໂຄງການ; ດໍາເນີນການຈັດຕັ້ງປະຕິບັດໂຄງການ ແລະເຮັດການກວດກາ, ປະເມີນຜົນ, ສະຫຼຸບຕີລາຄາດ້ານດີ, ດ້ານອ່ອນ; ຊຸກຍູ້ສົ່ງເສີມພາກທຸລະກິດເຂົ້າຮ່ວມໃນການພັດທະນາທາງຫຼວງທັງເປັນການສ້າງຄວາມເຂັ້ມແຂງພາຍໃນ ກໍຄືການປະຕິບັດມະຕິວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່; ຂະແໜງການທີ່ກ່ຽວຂ້ອງຕ້ອງປະຕິບັດຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ; ສໍາລັບການນໍາເຂົ້າ ແລະ ການຊື້ຢູ່ພາຍໃນຕ່າງໆ ແມ່ນບໍ່ໃຫ້ຫຼຸດຜ່ອນພາສີ-ອາກອນ, ໃຫ້ປະຕິບັດຕາມກົດໝາຍກ່ອນ, ຈາກນັ້ນຈຶ່ງປະກອບເອກະສານເພື່ອຂໍເງິນຄືນບົນພື້ນຖານການໃຫ້ນະໂຍບາຍຫຼຸດຜ່ອນຕາມຫຼັງ.

ທ່ານລັດຖະມົນຕີໄດ້ສະເໜີສະພາແຫ່ງຊາດ ພິຈາລະນາໃຫ້ມີການເຮັດທົດລອງໂຄງການເປົ້າໝາຍຟື້ນຟູທາງຫຼວງແຫ່ງຊາດເປັນຕົ້ນ: 1) ທາງ 13ເໜືອ ເລີ່ມແຕ່ເມືອງວັງວຽງ-ເມືອງກາສີ ແຂວງວຽງຈັນ - ເມືອງພູຄູນ-ເມືອງຊຽງເງິນ-ນະຄອນຫຼວງພະບາງ-ສາມແຍກປາກມອງ ເມືອງນໍ້າບາກ ແຂວງຫຼວງພະບາງ; 2) ທາງເລກ4 ເລີ່ມຈາກສາມແຍກເມືອງຊຽງເງິນ-ເມືອງນານ ແຂວງຫຼວງພະບາງ - ເມືອງໄຊຍະບູລີ-ເມືອງປາກລາຍ-ເມືອງແກ່ນທ້າວ ແຂວງໄຊຍະບູລີ; 3) ທາງເລກ 8 ເລີ່ມຈາກສາມແຍກ 13 ໃຕ້ ບ້ານວຽງຄໍາ ເມືອງປາກກະດິງ-ຊາຍແດນ ລາວ-ຫວຽດນາມ ເມືອງຄໍາເກີດ ແຂວງບໍລິຄໍາໄຊ; 4) ທາງເລກ 9 ເລີ່ມແຕ່ວົງວຽນໄດໂນເສົາ ນະຄອນໄກສອນພົມວິຫານ-ເຊໂນ-ຊາຍແດນ ລາວ-ຫວຽດນາມ ເມືອງເຊໂປນ ແຂວງສະຫວັນນະເຂດ ແລະ 5) ທາງເລກ22 ເລີ່ມແຕ່ແຍກທາງເລກ 13 ເໜືອ ເມືອງກາສີ ແຂວງວຽງຈັນ - ສາມແຍກບ້ານປົ່ງດົງ ເມືອງນານ ແຂວງຫຼວງພະບາງ.



## 143 ກົດໝາຍ...

(ຕໍ່ຈາກໜ້າ 1)

ແນວທາງນະໂຍບາຍທີ່ໄດ້ຜັນຂະຫຍາຍມາເປັນຫຼັກການ, ລະບຽບການ ແລະ ມາດຕະການອັນລະອຽດໃນທຸກຂົງເຂດວຽກງານ; ກະຊວງ, ອົງການຕະຫຼອດຮອດອົງການປົກຄອງທ້ອງຖິ່ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງແຂງແຮງ ແລະ ເລິກເຊິ່ງ ເຮັດໃຫ້ພະນັກງານ-ລັດຖະກອນ, ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ປະຊາຊົນລາວບັນດາເຜົ່າມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍສູງຂຶ້ນ, ສັງຄົມມີຄວາມສະເໝີພາບ, ສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາໂດຍພື້ນຖານ.

ກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງລັດຖະບານ ປັດຈຸບັນມີ 147 ສະບັບ ໃນນີ້, ໄດ້ໂຄສະນາເຜີຍແຜ່143ກົດໝາຍ. ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ຄົ້ນຄວ້າສ້າງແຜນການ, ແຜນງານ ແລະ ໂຄງການໂຄສະນາເຜີຍແຜ່ກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຜ່ານຮູບການຕ່າງໆ ໂດຍສະເພາະໄດ້ຈັດພິມປຶ້ມກົດໝາຍ 4 ຂົງເຂດ, ແຈກຢາຍປຶ້ມສັງລວມກົດໝາຍ 356,489 ຫົວ ໃຫ້ສໍານັກງານ, ອົງການ ແລະ ສະໜອງເຂົ້າຕູ້ປຶ້ມກົດໝາຍປະຈໍາບ້ານ ເພື່ອອໍານວຍຄວາມສະດວກໃຫ້ປະຊາຊົນລາວບັນດາເຜົ່າໄດ້ນໍາໃຊ້; ໂຄສະນາເຜີຍແຜ່ເຊື່ອມຊຶມກົດໝາຍ106,568 ຄັ້ງ ມີຜູ້ເຂົ້າຮ່ວມ 20,550,014 ເທື່ອຄົນ ຍິງ 5,754,583 ເທື່ອຄົນ; ໂຄສະນາເຜີຍແຜ່ຜ່ານສື່ມວນຊົນດ້ວຍການຜະລິດລາຍການຄວາມຮູ້ທາງດ້ານກົດໝາຍ, ລະຄອນສັ້ນ, ສາລະຄະດີ, ສະປອດໂຄສະນາ, ແຜ່ນພັບ, ໂພດສ໌ເຕີ ເປັນພາສາລາວ, ພາສາມົ້ງ ແລະ ພາສາກຶມມຸ ເຜີຍແຜ່ຜ່ານວິທະຍຸ, ໂທລະພາບ, ໂທລະໂຄ່ງ, ເຟສບຸກ, ຢູທູບ, ວາລະສານແລະໜັງສືພິມ; ໂຄສະນາເຜີຍແຜ່ຜ່ານເວັບໄຊຈົດໝາຍເຫດທາງລັດຖະການຂອງລັດຖະບານ, ແອັບກົດໝາຍລາວຂອງກະຊວງຍຸຕິທໍາແລະເວັບໄຊຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເຊິ່ງມີຜູ້ເຂົ້າຊົມໃຊ້ຈົດໝາຍເຫດທາງລັດຖະການ 249,000 ເທື່ອຄົນ, ເຂົ້າຊົມໃຊ້ແອັບກົດໝາຍລາວ 136,732 ຄັ້ງ; ຄົ້ນຄວ້າຫັນເອົາກົດໝາຍເຂົ້າໃນຫຼັກສູດການສຶກສາ ທັງພາກລັດ ແລະ ເອກະຊົນ ພ້ອມທັງເປີດການຮຽນ-ການສອນກົດໝາຍຊັ້ນຕົ້ນ ໃຫ້ພະນັກງານຫຼັກແຫຼ່ງຂອງແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແລະ ອົງການຈັດຕັ້ງຂັ້ນບ້ານ 1,507 ຄົນ ຍິງ 447 ຄົນ.

ຄຽງຄູ່ກັບຜົນສໍາເລັດ, ຍັງພົບຂໍ້ຫຍຸ້ງຍາກທີ່ເປັນສິ່ງທ້າທາຍ ເປັນຕົ້ນ: ບຸກຄະລາກອນທີ່ເຮັດວຽກງານໂຄສະນາເຜີຍແຜ່ກົດໝາຍ ຍັງມີຄວາມຈໍາກັດດ້ານປະລິມານ ແລະຄຸນນະພາບ; ປະຊາຊົນຈໍານວນໜຶ່ງ ອາໄສຢູ່ເຂດພູດອຍ, ຫ່າງໄກສອກຫຼີກ ເຮັດໃຫ້ການເຂົ້າເຖິງກົດໝາຍພົບຄວາມຫຍຸ້ງຍາກ; ພົນລະເມືອງຈໍານວນໜຶ່ງ ມີແນວຄິດຈິງໃຈຫຼົບຫຼີກຈາກການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະມາດຕະການຂອງກົດໝາຍ, ຮູ້ກົດໝາຍ ແຕ່ຈິງໃຈບໍ່ປະຕິບັດ, ສວຍໃຊ້ຊ່ອງວ່າງຂອງກົດໝາຍເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ; ການຊອກແຫຼ່ງທຶນ, ການຕອບສະໜອງດ້ານວັດຖຸອຸປະກອນ, ພາຫະນະ ເຂົ້າໃນວຽກງານໂຄສະນາເຜີຍແຜ່ກົດໝາຍ ຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ.

ສໍາລັບທິດທາງໃນຕໍ່ໜ້າ ຈະຍົກລະດັບດໍາລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກໍາ ຂຶ້ນເປັນກົດໝາຍ; ເພີ່ມທະວີບົດບາດຄຸ້ມຄອງມະຫາພາກວຽກງານໂຄສະນາເຜີຍແຜ່ກົດໝາຍ ໂດຍການສ້າງແຜນການພັດທະນາການໂຄສະນາເຜີຍແຜ່ກົດໝາຍແຕ່ປີ 2026-2030 ເພື່ອຊຸກຍູ້, ຕິດຕາມກວດກາການຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍຂອງຂະແໜງການຕ່າງໆ ໃຫ້ເປັນລະບົບ; ສ້າງພະນັກງານໂຄສະນາເຜີຍແຜ່ນິຕິກໍາຂອງຂະແໜງການຕ່າງໆ ດ້ວຍການຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ; ດໍາເນີນການປະເມີນ ແລະ ເກັບກໍາສະຖິຕິການໂຄສະນາເຜີຍແຜ່ກົດໝາຍແນໃສ່ປັບປຸງກົນໄກ, ຮູບການ, ວິທີການໂຄສະນາເຜີຍແຜ່ນິຕິກໍາ ໃຫ້ມີຄວາມດຶງດູດ, ແທດເໝາະກັບລະດັບຄວາມຮັບຮູ້, ຄວາມສົນໃຈຂອງເປົ້າໝາຍ ແລະ ໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງສູນກາງ ແລະ ທ້ອງຖິ່ນ; ປັບປຸງກົນໄກປະສານສົມທົບລະຫວ່າງບັນດາກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ໃຫ້ມີຄວາມໂລ່ງລ່ຽນກວ່າເກົ່າ; ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການໂຄສະນາເຜີຍແຜ່ກົດໝາຍ ເປັນຕົ້ນດ້ານງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆ ໃຫ້ພຽງພໍ.

# ສະເໜີໃຫ້ກະຊວງຍຸຕິທຳ ສ້າງຄູ່ມື ການໂຄສະນາເຜີຍແຜ່ກົດໝາຍ



(ສພຊ) - ວາລະກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນບ່າຍວັນສຸກທີ 13 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ພາຍຫຼັງຮັບຟັງລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ຈາກທ່ານ ໄພວີ ສີບົວລິພາ ລັດຖະມົນຕີກະຊວງຍຸຕິທຳ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ ເພື່ອເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບແລະປະສິດທິຜົນ ເຊິ່ງໄດ້ສະເໜີໃຫ້ຄົ້ນຄວ້າສ້າງຄູ່ມືການໂຄສະນາເຜີຍແຜ່ກົດໝາຍ ໂດຍຄັດຈ້ອນເອົາເນື້ອໃນຂອງກົດໝາຍທີ່ຕິດພັນກັບຄວາມຮັບຜິດຊອບການເມືອງຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ກໍຄືເນື້ອໃນທີ່ຕິດພັນກັບຊີວິດປະຈຳວັນຂອງປະຊາຊົນ ເພື່ອໂຄສະນາເຜີຍແຜ່, ເຊື່ອມຊຶມ ໃຫ້ເລິກເຊິ່ງ ແລະ ທົ່ວເຖິງ; ເພີ່ມທະວີຊີ້ນຳຢ່າງໃກ້ຊິດຕໍ່ວຽກງານໂຄສະນາເຜີຍແຜ່ກົດໝາຍໃຫ້ຫຼາຍຂຶ້ນ, ຄົ້ນຄວ້າສ້າງຖານຂໍ້ມູນຂ່າວສານດ້ານກົດໝາຍທີ່ທັນສະໄໝ ເພື່ອເປັນແຫຼ່ງຂໍ້ມູນໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ເຂົ້າເຖິງກົດໝາຍສະດວກ ແລະ ວ່ອງໄວ.

# 2 ບໍລິສັດຈີນ ຮ່ວມມືບໍລິການ ດ້ານກົດໝາຍແກ່ນັກລົງທຶນຢູ່ລາວ




(ສພຊ) - ວັນທີ 14 ມິຖຸນາຜ່ານມາ, ໄດ້ພິທີເຊັນສັນຍາຮ່ວມມືທຸລະກິດບໍລິການດ້ານກົດໝາຍລະຫວ່າງບໍລິສັດ ເຟີງສຽວຫຼີງ ຈຳກັດຜູ້ດຽວ ກັບ ບໍລິສັດ ຢຸນນານ ທຽນວາຍທຽນ ທີ່ປຶກສາກົດໝາຍ ແລະ ເປີດສາຂາທີ່ປຶກສາກົດໝາຍປະຈຳ ສປປລາວ ມີສຳນັກງານຫ້ອງການຕັ້ງຢູ່ບ້ານນາຄຳ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ; ເຂົ້າຮ່ວມມີທ່ານ ມອນໄຊ ລາວມົ້ວຊົງ ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ບັນດານັກທຸລະກິດຈີນທີ່ມາລົງທຶນຢູ່ລາວ ແລະ ຜູ້ຕາງໜ້າຂະແໜງການທີ່ກ່ຽວຂ້ອງຂອງ ສປປລາວ.

ໃນພິທີ, ທ່ານ ເຟີງສຽວຫຼີງ ປະທານບໍລິສັດເຟີງສຽວຫຼີງ ຈຳກັດຜູ້ດຽວ ແລະ ທ່ານ ຈາງ ຢີ ທີ່ປຶກສາດ້ານກົດໝາຍ, ຫົວໜ້າຫ້ອງການບໍລິສັດ ຢຸນນານ ທຽນວາຍທຽນລາວ ຈຳກັດ ໄດ້ກ່າວວ່າ: ການຮ່ວມມືຂອງສອງບໍລິສັດຄັ້ງນີ້ ເພື່ອເປີດຫ້ອງການທີ່ປຶກສາດ້ານກົດໝາຍຢູ່ ສປປລາວ ໂດຍໃຫ້ບໍລິການທາງດ້ານກົດໝາຍສາກົນແລະກົດໝາຍລາວ ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຊື່ອໝັ້ນຕໍ່ນັກລົງທຶນໃຫ້ເຂົ້າມາລົງທຶນຢູ່ລາວ ມີຈຳນວນເພີ່ມຂຶ້ນເລື້ອຍໆ ເຊິ່ງຈີນເປັນປະເທດໜຶ່ງທີ່ມີນັກທຸລະກິດເຂົ້າມາລົງທຶນຢູ່ລາວເປັນອັນດັບຕົ້ນໆ ແລະ ການລົງທຶນ ກໍຕ້ອງປະຕິບັດຕາມກົດໝາຍຂອງລາວໂດຍສະເພາະກົດໝາຍວ່າດ້ວຍການສົ່ງເສີມການລົງທຶນເຊິ່ງການເຂົ້າມາລົງທຶນຢູ່ລາວ ແນ່ນອນຍັງມີບາງບໍລິສັດກໍຄືຫົວໜ່ວຍທຸລະກິດຕ່າງປະເທດ ບໍ່ທັນເຂົ້າໃຈດ້ານກົດໝາຍແລະລະບຽບການລົງທຶນຕ່າງໆຂອງລາວເທົ່າທີ່ຄວນ; ດັ່ງນັ້ນ, ສອງບໍລິສັດຈຶ່ງໄດ້ຮ່ວມມືກັນສ້າງຕັ້ງຫ້ອງການທີ່ປຶກສາປະຈຳລາວ ເພື່ອເຮັດໜ້າທີ່ໃຫ້ການບໍລິການດ້ານກົດໝາຍສາກົນ ແລະກົດໝາຍລາວ ບໍ່ວ່າຈະໃຫ້ຄຳປຶກສາ ແລະ ໃຫ້ຂໍ້ມູນດ້ານກົດໝາຍຕ່າງໆເພື່ອເຮັດໃຫ້ການດຳເນີນທຸລະກິດຂອງບັນດາຫົວໜ່ວຍທຸລະກິດຢູ່ລາວ ຖືກຕ້ອງຕາມກົດໝາຍ ແລະ ເຮັດໃຫ້ທຸລະກິດຂອງບໍລິສັດມີຜົນສຳເລັດເປັນກ້າວໆ ພ້ອມກັນສ້າງສາພັດທະນາປະເທດລາວໃຫ້ຈະເລີນຮຸ່ງເຮືອງສີວິໄລ.

**(ວຽງຈັນໃໝ່/ VientianeMai's post)**

# ກອງປະຊຸມສະພາທີ່ປຶກສາຂອງໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ




(ສພຊ) - ວັນທີ 8-13 ມິຖຸນາ 2025 ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເດີນທາງໄປເຂົ້າຮ່ວມກອງປະຊຸມສະພາທີ່ປຶກສາຂອງໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ ຄັ້ງທີ 8 (The 8th Meeting of the AIPA Advisory Council on Dangerous Drug - AIPACODD) ທີ່ເມືອງກວນຕັນ ລັດປາຮັງ ປະເທດມາເລເຊຍ ໂດຍການຮ່ວມເປັນເຈົ້າພາບລະຫວ່າງສະພາຜູ້ແທນລາສະດອນມາເລເຊຍ ແລະ ສະພານິຕິບັນຍັດແຫ່ງລັດປາຮັງ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມຈາກ 9 ປະເທດສະມາຊິກໄອປາ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນພາຍໃຕ້ຫົວຂໍ້ "ການເຕົ້າໂຮມຂອງລັດຖະສະພາບັນດາປະເທດອາຊຽນ ເພື່ອຄວາມເປັນເອກະພາບ ແລະ ຍືນຍົງ ໃນການແກ້ໄຂສິ່ງທ້າທາຍດ້ານຢາເສບຕິດໃນປັດຈຸບັນ" ພ້ອມກັນນີ້, ຄະນະຜູ້ແທນແຕ່ລະປະເທດ ໄດ້ປຶກສາຫາລື ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບມາດຕະການໃນການຄວບຄຸມຢາເສບຕິດໃນປະເທດຂອງຕົນ, ສິ່ງທ້າທາຍທີ່ເກີດຂຶ້ນ, ການບຳບັດຮັກສາ ແລະ ການຟື້ນຟູ, ການນຳໃຊ້ມາດຕະການເພື່ອຫຼຸດຜ່ອນການນຳໃຊ້ຢາເສບຕິດ ເຊິ່ງໄດ້ບັນລຸຫຼາຍກວ່າການປຶກສາຫາລືແບບທົ່ວໄປ ແລະ ຍັງໄດ້ກຳນົດເອົາທິດທາງໃໝ່ສຳລັບການຮ່ວມມືຂອງລັດຖະສະພາ ໃນການແກ້ໄຂບັນຫາທີ່ທ້າທາຍດ້ານຄວາມໝັ້ນຄົງ ແລະສາທາລະນະສຸກທີ່ຮີບດ່ວນທີ່ສຸດຂອງອາຊຽນ; ຜ່ານການຮັບຟັງ ແລະ ແລກປ່ຽນຄວາມຄິດເຫັນຂອງບັນດາຄະນະຜູ້ແທນແຕ່ລະປະເທດ, ກໍໄດ້ມີການຕົກລົງຮັບຮອງເອົາເນື້ອໃນມະຕິດັ່ງກ່າວຢ່າງເປັນເອກະສັນ ເຊິ່ງເປັນຂີດໝາຍອັນສຳຄັນອີກໜຶ່ງບາດກ້າວຂອງ AIPACODD ທີ່ສະທ້ອນໃຫ້ເຫັນແນວທາງໃໝ່ໃນການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມແລະການສ້າງລະບົບທີ່ເຂັ້ມແຂງ, ຍືນຍົງ ແລະ ຍາວນານ. ກອງປະຊຸມຍັງມີການເຫັນດີກ່ຽວກັບເງື່ອນໄຂການອ້າງອີງຂອງຄະກຳມະການສຶກສາກ່ຽວກັບການປ່ຽນຊື່ຈາກ AIPACODD ເປັນການຮ່ວມມືແກ້ໄຂບັນດາຂົງເຂດອາຊະຍາກຳຂ້າມຊາດ (Address Broader Areas of Cooperation on Transnational Crime) ທີ່ສະເໜີໂດຍທ່ານເລຂາທິການໃຫຍ່ໄອປາ; ພ້ອມກັນນັ້ນ, ປະທານກອງປະຊຸມຍັງໄດ້ຍົກໃຫ້ເຫັນຄວາມສຳຄັນໃນການປ່ຽນຊື່ຄັ້ງນີ້ ທີ່ຈະສະທ້ອນເຖິງການຮັບຮູ້ຮ່ວມກັນຕໍ່ການຜັນຂະຫຍາຍຂອງເຄືອຂ່າຍອາຊະຍາກຳພາກພື້ນໃນປັດຈຸບັນ ທີ່ໄດ້ພັດທະນາໄປໄກເກີນກວ່າການຄ້າຢາເສບຕິດພຽງຢ່າງດຽວ ແຕ່ຍັງໄດ້ຂະຫຍາຍໄປຫຼາຍຂົງເຂດ ເຊັ່ນ: ການຄ້າມະນຸດ, ການລັກລອບຄ້າຂາຍສັດປ່າ, ການກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການຟອກເງິນ. ກອງປະຊຸມໄດ້ຊີ້ໃຫ້ເຫັນວ່າ ລັດຖະສະພາອາຊຽນ ຈະຕ້ອງຕອບສະໜອງຕໍ່ກັບບັນຫາດັ່ງກ່າວໃຫ້ເໝາະສົມ ແລະ ໄດ້ຖືເອົາການປຶກສາຫາລືຫາໃນຄັ້ງນີ້ ເປັນບາດກ້າວທຳອິດທີ່ສຳຄັນ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຜູ້ແທນສະພາແຫ່ງຊາດລາວ ໄດ້ມີຄຳເຫັນໃນກອງປະຊຸມ ໂດຍໄດ້ສະເໜີບົດລາຍງານຄວາມຄືບໜ້າກ່ຽວກັບສະພາບຢາເສບຕິດ ແລະ ອາຊະຍາກຳຂ້າມຊາດ ຢູ່ ສປປລາວ ເຊິ່ງຍົກໃຫ້ເຫັນເຖິງຄວາມພະຍາຍາມຢ່າງຕໍ່ເນື່ອງຂອງລັດຖະບານ ຕໍ່ການປະຕິບັດຕາມວາລະແຫ່ງຊາດກ່ຽວກັບການຄວບຄຸມຢາເສບຕິດແລະທາດເຄມີ(2021-2025) ໂດຍສຸມໃສ່ການປະສານງານໃນທົ່ວພາກລັດ ແລະ ສັງຄົມ.ພ້ອມທັງໄດ້ລາຍງານວ່າ ໃນປີ 2024 ໜ່ວຍງານສະກັດກັ້ນ ແລະ ປາບປາມຢາເສບຕິດ ສປປລາວ ໄດ້ບັນລຸຜົນສຳເລັດໃນການສະກັດກັ້ນການຄ້າຂາຍຢາເສບຕິດໃນຂອບເຂດທົ່ວປະເທດ ມີ 4,063 ຄະດີ, ຈັບຕົວຜູ້ກະທຳຜິດ 6,332 ຄົນ (ຕ່າງຊາດ 132 ຄົນ), ຍຶດຂອງກາງໄດ້ຢາບ້າເກືອບ 70 ລ້ານເມັດ ຢາໄອຊ໌ 1,373 ກິໂລ ເຮໂຣອີນ 179 ກິໂລ; ການບັງຄັບໃຊ້ກົດໝາຍເຂັ້ມແຂງຂຶ້ນດ້ວຍດຳລັດໃໝ່ ແລະ ການເຝົ້າລະວັງຊາຍແດນທີ່ດີຂຶ້ນ ໂດຍການປະສານງານຂອງ 25 ຫ້ອງການຕິດຕໍ່ພົວພັນທາງຊາຍແດນ ໃນການຮ່ວມມືສອງຝ່າຍ ແລະ ສາກົນລວມໄປເຖິງຄວາມພະຍາຍາມໃນການຂະຫຍາຍສູນການຟື້ນຟູ ແລະ ປ້ອງກັນ ທີ່ລັດຖະບານລາວໄດ້ໃຫ້ຄວາມສຳຄັນ ໂດຍມີຫຼາຍກວ່າ 8,400 ຄົນ ໄດ້ຮັບການບຳບັດປິ່ນປົວ ແລະ ໄດ້ມີກິດຈະກຳປຸກລະດົມແນວຄິດກ່ຽວກັບໄພຂອງຢາເສບຕິດ 3,800 ກິດຈະກຳ ມີຜູ້ເຂົ້າຮ່ວມ 2.8 ລ້ານຄົນ. ໃນຕົ້ນປີ 2025, ສປປລາວ ບັນລຸໄດ້ຄວາມຄືບໜ້າທີ່ພົ້ນເດັ່ນ ໂດຍຜ່ານການນຳພາທີ່ເຂັ້ມແຂງ, ການປະສານງານລະຫວ່າງຂະແໜງການ, ການເຂົ້າຮ່ວມຂອງຊຸມຊົນ; ວຽກງານກົດໝາຍ ໄດ້ຮັບການເສີມສ້າງດ້ວຍດຳລັດໃໝ່ ທີ່ແນໃສ່ສານເສບຕິດທີ່ອອກລິດຕໍ່ປະສາດຊະນິດໃໝ່ (NPS) ແລະ ສານເຄມີຕົ້ນ (Precursor chemicals), ການບັງຄັບໃຊ້ກົດໝາຍເຮັດໃຫ້ມີການຈັບກຸມ ແລະ ມ້າງເຄືອຂ່າຍການຄ້າມະນຸດຂ້າມຊາດຢ່າງຫຼວງຫຼາຍ; ໃນຂະນະທີ່ສູນການບຳບັດຟື້ນຟູ ໄດ້ຂະຫຍາຍເພີ່ມຂຶ້ນ ແລະ ເຂົ້າເຖິງຊຸມຊົນຫຼາຍຂຶ້ນ; ພ້ອມທັງສຸມໃສ່ສ້າງບ້ານປອດຢາເສບຕິດ, ໂຮງຮຽນປອດຢາເສບຕິດ, ເຂດຊາຍແດນປອດຢາເສບຕິດ ຕາມວິໄສທັດຂອງອາຊຽນກ່ຽວກັບປະຊາຄົມປອດໄພ ແລະປອດຢາເສບຕິດ. ນອກຈາກນີ້, ຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ປະກອບຄຳເຫັນຕື່ມອີກຈຳນວນໜຶ່ງຕໍ່ຮ່າງມະຕິການເຕົ້າໂຮມຂອງລັດຖະສະພາບັນດາປະເທດອາຊຽນເພື່ອຄວາມເປັນເອກະພາບ ແລະ ຍືນຍົງ ໃນການແກ້ໄຂສິ່ງທ້າທາຍດ້ານຢາເສບຕິດໃນປັດຈຸບັນ.

## ປີທ່ອງທ່ຽວ...

(ຕໍ່ຈາກໜ້າ 1)

14 ກິດຈະກຳ ປະຕິບັດສຳເລັດ 100% ແລະ ກິດຈະກຳລະດັບແຂວງ 65 ກິດຈະກຳ ປະຕິບັດໄດ້ 98.5% ຍ້ອນບາງແຂວງຍັງບໍ່ມີເງື່ອນໄຂຄວາມພ້ອມ ຈຶ່ງບໍ່ສາມາດປະຕິບັດໄດ້ຢ່າງສົມບູນ. ນອກນີ້, ຍັງມີກິດຈະກຳປິ່ນອ້ອມທັງພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາ, ຊຸກຍູ້ ແລະ ສົ່ງເສີມການທ່ອງທ່ຽວລາວໃຫ້ມີຄວາມຟົດຟື້ນ ເຊັ່ນ: ການຈັດງານວັນລາວ ທີ່ຍີ່ປຸ່ນ, ເຂົ້າຮ່ວມງານວາງສະແດງສາກົນ ແລະ ພາກພື້ນ, ແລະ ການຈັດສຳມະນາພົບປະລະຫວ່າງຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ ຢູ່ ຫວຽດນາມ, ກຳປູເຈຍ, ໄທ ແລະ ປະເທດອື່ນໆ; ເພີ່ມທະວີການໂຄສະນາປະຊາສຳພັນໃຫ້ກວ້າງຂວາງ ແລະ ເຂົ້າເຖິງກຸ່ມເປົ້າໝາຍການຕະຫຼາດ, ຍົກເວັ້ນວີຊາແກ່ນັກທ່ອງທ່ຽວກຸ່ມເປົ້າໝາຍຈຳນວນໜຶ່ງ ເພື່ອດຶງດູດນັກທ່ອງທ່ຽວໃຫ້ມາທ່ອງທ່ຽວຫຼາຍຂຶ້ນ.

ປີ 2024 ມີນັກທ່ອງທ່ຽວພາຍໃນ 3,904,483 ເທື່ອຄົນ ເພີ່ມຂຶ້ນເຖິງ 102% ກະຈາຍລາຍຮັບໄດ້ 632,526,246 ໂດລາ; ນັກທ່ອງທ່ຽວສາກົນມີ 4,120,832 ເທື່ອຄົນ ເພີ່ມຂຶ້ນ 21% ກະຈາຍລາຍຮັບໄດ້ 1,138,003,848 ໂດລາ. ສາມເດືອນຕົ້ນປີ 2025 ຕ້ອນຮັບນັກທ່ອງທ່ຽວຕ່າງປະເທດ 1,262,035 ເທື່ອຄົນເພີ່ມຂຶ້ນ 11% ທຽບໃສ່ໄລຍະດຽວກັນຂອງປີ 2024, ຄາດຄະເນລາຍຮັບທີ່ກະຈາຍໃນສັງຄົມ 426,975,454 ໂດລາ; ນັກທ່ອງທ່ຽວພາຍໃນ 1,467,886 ເທື່ອຄົນ ເພີ່ມຂຶ້ນ 98.6% ທຽບໃສ່ໄລຍະດຽວກັນຂອງປີ 2024, ລາຍຮັບທີ່ກະຈາຍໃນສັງຄົມ 237,797,532 ໂດລາ. ສຳລັບນັກທ່ອງທ່ຽວ 10 ອັນດັບຕົ້ນທີ່ມາທ່ຽວລາວ: 1. ໄທ, 2. ຈີນ (ເລື່ອນຈາກອັນດັບ 3), 3. ຫວຽດນາມ, 4. ສ.ເກົາຫຼີ, 5. ອາເມລິກາ, 6. ຝຣັ່ງ, 7. ລັດເຊຍ, 8. ອັງກິດ, 9 ເຢຍລະມັນ, 10. ຍີ່ປຸ່ນ; ນະໂຍບາຍຍົກເວັ້ນວີຊາໃຫ້ບາງປະເທດກຸ່ມເປົ້າໝາຍໄລຍະປີທ່ອງທ່ຽວລາວ 2024 (ເລີ່ມແຕ່ກໍລະກົດ-ທັນວາ) ເຫັນວ່ານັກທ່ອງທ່ຽວຈີນແມ່ນໄດ້ຮັບຜົນເກີນຄາດໝາຍທີ່ວາງໄວ້ ເຊິ່ງມີ 1,048,034 ເທື່ອຄົນ ເພີ່ມຂຶ້ນ 63%.

ການເປີດປີທ່ອງທ່ຽວລາວ 2024 ເປັນໂອກາດດີໃນການປັບປຸງຄຸນນະພາບການບໍລິການຂອງທຸລະກິດການທ່ອງທ່ຽວ ແລະ ຂະແໜງການບໍລິການທີ່ປິ່ນອ້ອມ, ຫຼາຍຫົວໜ່ວຍທຸລະກິດໄດ້ຮັບການປະເມີນ ແລະ ຢັ້ງຢືນມາດຕະຖານການທ່ອງທ່ຽວອາຊຽນ; ສ້າງວຽກເຮັດງານທຳໃຫ້ສັງຄົມ, ສ້າງລາຍຮັບ, ຊຸກຍູ້ໃຫ້ບັນດາຜູ້ປະກອບການທຸລະກິດທ່ອງທ່ຽວ, ທຸລະກິດປິ່ນອ້ອມ ແລະ ການຜະລິດກະສິກຳ, ຫັດຖະກຳ ໃຫ້ກາຍເປັນສິນຄ້າສະໜອງໃຫ້ແກ່ນັກທ່ອງທ່ຽວ; ເພີ່ມທະວີການຮ່ວມມື ແລະ ມີສ່ວນຮ່ວມຂອງປະຊາຊົນລາວບັນດາເຜົ່າໃນການປົກປັກຮັກສາຊັບພະຍາກອນທ່ອງທ່ຽວໃຫ້ມີຄວາມຍືນຍົງ ໂດຍສະເພາະການສົ່ງເສີມການທ່ອງທ່ຽວທາງດ້ານວັດທະນະທຳ, ທຳມະຊາດ, ປະຫວັດສາດ ແລະ ກະສິກຳ ເຮັດໃຫ້ກາຍເປັນວຽກງານລວມຂອງທຸກຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນໃນທົ່ວປະເທດຢ່າງແທ້ຈິງ.

ສຳລັບທິດທາງແຜນການຕໍ່ໜ້າ, ຈະສຸມໃສ່ປັບປຸງເສັ້ນທາງເຂົ້າເຖິງສະຖານທີ່ທ່ອງທ່ຽວບຸລິມະສິດ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ, ການຄົມມະນາຄົມຂົນສົ່ງນັກທ່ອງທ່ຽວ ໃຫ້ມີຄວາມສະດວກ, ສະອາດ, ປອດໄພ, ປະທັບໃຈ, ໄດ້ມາດຕະຖານ ແລະ ມີຄວາມຍືນຍົງ; ຊຸກຍູ້ຜູ້ພັດທະນາສະຖານທີ່ທ່ອງທ່ຽວ, ປັບປຸງກິດຈະກຳການທ່ອງທ່ຽວ ແລະ ການບໍລິການ ໃຫ້ມີຄວາມຫຼາກຫຼາຍ ໂດຍການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນແລະພາກເອກະຊົນຜູ້ທີ່ມີບົດຮຽນ ແລະ ປະສົບການ; ປັບປຸງການບໍລິຫານ-ຄຸ້ມຄອງບັນດາເມືອງທ່ອງທ່ຽວ ທີ່ເປັນແມ່ເຫຼັກດຶງດູດນັກທ່ອງທ່ຽວ ໃຫ້ໄດ້ມາດຕະຖານຂອງ ສປປລາວ ແລະ ສາກົນ; ສຸມໃສ່ການປະເມີນແລະຢັ້ງຢືນມາດຕະຖານການທ່ອງທ່ຽວອາຊຽນ ແລະ ມາດຕະຖານການທ່ອງທ່ຽວຂອງ ສປປລາວ ເພື່ອຮັບປະກັນສ້າງຄວາມປະທັບໃຈ ແລະ ມີຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ; ໂຄສະນາການທ່ອງທ່ຽວທີ່ເປັນຈຸດເດັ່ນໃຫ້ມີຫຼາກຫຼາຍຮູບແບບຜ່ານສື່ຕ່າງໆ; ພັດທະນາລະບົບການຊຳລະຜ່ານລະບົບທະນາຄານ ເພື່ອໃຫ້ມີເງິນໝູນວຽນພາຍໃນປະເທດໃຫ້ຫຼາຍຂຶ້ນ; ທັນເປັນທັນສະໄໝໃນການກວດກາເອກະສານຕ່າງໆຢູ່ບັນດາດ່ານເພື່ອຫຼຸດຜ່ອນຂັ້ນຕອນ, ສາມາດອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ແລະ ມີຖານຂໍ້ມູນທີ່ລະອຽດຢູ່ໃນລະບົບ; ຈັດກິດຈະກຳປູກຈິດສຳນຶກໃນວຽກງານທ່ອງທ່ຽວ ແລະກິດຈະກຳສົ່ງເສີມການທ່ອງທ່ຽວ ໃຫ້ເປັນຂະບວນຟົດຟື້ນ ໂດຍຕິດພັນກັບງານເທດສະການ ແລະງານບຸນປະເພນີປະຈຳຊາດ ແລະ ປະຈຳທ້ອງຖິ່ນ ເພື່ອຈັດເຂົ້າໃນປະຕິທິນການທ່ອງທ່ຽວລາວ ປະຈຳປີ 2025 ແລະ ປີຕໍ່ໆໄປ; ຊຸກຍູ້ສະມາຄົມຂະແໜງການທ່ອງທ່ຽວ ໃຫ້ມີການເຄື່ອນໄຫວຮ່ວມກັນກັບພາກທຸລະກິດຂອງບັນດາປະເທດໃກ້ຄຽງ ແນໃສ່ຂະຫຍາຍລາຍການທ່ອງທ່ຽວຮ່ວມກັນໃຫ້ຫຼາຍຂຶ້ນ; ປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ເພື່ອຄົ້ນຄວ້ານະໂຍບາຍວີຊາໃຫ້ແກ່ນັກທ່ອງທ່ຽວກຸ່ມເປົ້າໝາຍ ໃຫ້ສອດຄ່ອງກັບນະໂຍບາຍຂອງປະເທດໃກ້ຄຽງ ກໍຄືພາກພື້ນ ເພື່ອດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາ ສປປລາວ ຫຼາຍຂຶ້ນ; ແລະ ອື່ນໆ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ຊາດ 5 ປີ ຄັ້ງທີ X (2026-2030) ເຊິ່ງທ່ານໃຫ້ຮູ້ວ່າ:

1. ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ການຈັດຕັ້ງປະຕິບັດແຜນການ 6 ເດືອນຕົ້ນປີ ຂອງລັດຖະບານ ເປັນຕົ້ນອັດຕາການເຕີບໂຕເສດຖະກິດ (GDP) ຄາດວ່າຈະສາມາດປະຕິບັດໄດ້ 4.5% ໃນນັ້ນ, ອຸດສາຫະກຳເຕີບໂຕ 4.7%, ອັດຕາເງິນເຟີ້ມີທ່າອຽງຫຼຸດລົງ, ການປະຕິບັດບັນດາຄາດໝາຍດ້ານວັດທະນະທຳ-ສັງຄົມ, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ມີຄວາມຄືບໜ້າທີ່ດີ.

2. ກອງປະຊຸມສະແດງຄວາມເປັນຫ່ວງຕໍ່ການປະຕິບັດບາງຄາດໝາຍຂອງແຜນການປະຈຳປີ 2025 ເປັນຕົ້ນການຜະລິດທົດແທນການນຳເຂົ້າ ແລະ ການປຸງແຕ່ງເປັນສິນຄ້າສົ່ງອອກບໍ່ທັນໄດ້ດີ, ລາຄາສິນຄ້າບາງໝວດລາຍການສິນຄ້າ ລວມທັງໄຟຟ້າຍັງເພີ່ມຂຶ້ນສູງ, ການສ້ອມແປງເສັ້ນທາງທີ່ເປ່ເພ ຍັງຊັກຊ້າ, ການຄຸ້ມຄອງໂຄງການສຳຫຼວດຂຸດຄົ້ນແຮ່ທາດ ຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນ, ການອອກໃບຕາດິນຍັງມີຄວາມຄືບໜ້າໜ້ອຍ ຈຶ່ງສະເໜີໃຫ້ລັດຖະບານຄົ້ນຄວ້າວິທີການແກ້ໄຂບັນຫາ ແລະ ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍໃນໄລຍະ 6 ເດືອນທ້າຍປີ ໃຫ້ບັນລຸຕາມແຜນການ.

3. ເພື່ອຮັບປະກັນການບັນລຸຄາດໝາຍການເຕີບໂຕເສດຖະກິດຢູ່ໃນລະດັບ 4.8% ໃນ 6 ເດືອນທ້າຍປີ, ສະເໜີໃຫ້ລັດຖະບານເອົາໃຈໃສ່ການຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານເສດຖະກິດ, ສ້າງຖານລາຍຮັບທີ່ມີຄວາມໝັ້ນຄົງ, ການສົ່ງເສີມການຜະລິດແລະການປຸງແຕ່ງສິນຄ້າກ່ອນການສົ່ງອອກ, ຈັດສັນເຂດການຜະລິດ, ເຂດປູກ, ເຂດລ້ຽງໃຫ້ເປັນກຸ່ມ, ເປັນສະຫະກອນແບບໃໝ່ ເພື່ອສາມາດເຂົ້າເຖິງແຫຼ່ງທຶນ ແລະ ຕະຫຼາດ.

4. ມອບໃຫ້ລັດຖະບານສືບຕໍ່ຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ; ຄົ້ນຄວ້າສຸມການລົງທຶນຂອງລັດເຂົ້າໃສ່ການຟື້ນຟູກໍ່ສ້າງພື້ນຖານໂຄງລ່າງໃຫ້ມີຈຸດສຸມ ໂດຍສະເພາະການຟື້ນຟູກໍ່ສ້າງສ້ອມແປງເສັ້ນທາງໃນເຂດຫ່າງໄກສອກຫຼີກ, ເສັ້ນທາງຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕາມແລວຊາຍແດນຕ່າງໆ, ເສັ້ນທາງຫຼວງແຫ່ງຊາດ ໂດຍສະເພາະເສັ້ນທາງເລກທີ 13 ເໜືອ ແລະ ເສັ້ນທາງໃນບັນດາແຂວງພາກເໜືອ, ໂຄງການຟື້ນຟູໄພພິບັດສຸກເສີນ, ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ຊົນນະບົດ, ການກໍ່ສ້າງຕ້ານເຈື່ອນຕາມແມ່ນ້ຳຊາຍແດນ. ມອບໃຫ້ລັດຖະບານສຸມງົບປະມານໃສ່ການກໍ່ສ້າງບັນດາໂຄງການດັ່ງກ່າວ ພ້ອມກັບການຊຳລະໜີ້ສິນໃຫ້ແກ່ໂຄງການກໍ່ສ້າງທີ່ສຳເລັດ 100%, ໂຄງການສືບຕໍ່ທີ່ໃກ້ຈະສຳເລັດແລະຈຳກັດໂຄງການສະເໜີໃໝ່; ພ້ອມກັນນັ້ນ, ເອົາໃຈໃສ່ຄຸ້ມຄອງນ້ຳໜັກລົດບັນທຸກສິນຄ້າ ໃຫ້ມີມາດຕະການທີ່ເຂັ້ມງວດ ແລະ ເດັດຂາດ ຕໍ່ການບັນທຸກນ້ຳໜັກເກີນ, ແບ່ງລາຍຮັບທີ່ໄດ້ຈາກຄ່າປັບໃໝໃຫ້ທ້ອງຖິ່ນ ເພື່ອນຳມາໃຊ້ຈ່າຍສ້ອມແປງເສັ້ນທາງທີ່ເປ່ເພ.

5. ເອົາໃຈໃສ່ສົ່ງເສີມການຜະລິດທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ຕາມແຜນວຽກຈຸດສຸມຂອງວາລະແຫ່ງຊາດ, ກຸ່ມຜະລິດຂະໜາດນ້ອຍ ແລະ ກາງ ຕາມກົດໝາຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນ, ຜູ້ແຮງງານຜະລິດກະສິກຳໃຫ້ຫຼາຍຂຶ້ນທັງຍົກລະດັບເຕັກນິກ-ວິຊາການ, ເຕັກໂນໂລຊີແລະທັນເປັນທັນສະໄໝເພື່ອຍົກລະດັບຜົນຜະລິດໃຫ້ສູງຂຶ້ນກວ່າເກົ່າ ແລະ ມີໂຄງການຕົວແບບໃນການຜະລິດ, ຈັດສັນເຂດປູກ-ເຂດລ້ຽງໃຫ້ຊັດເຈນ ແລະ ຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ພາຍໃນຢ່າງເຂັ້ມງວດ, ເອົາໃຈໃສ່ປັບປຸງ ແລະ ກະກຽມຄວາມພ້ອມດ້ານຊົນລະປະທານຮັບໃຊ້ການຜະລິດໃນລະດູແລ້ງ ໃຫ້ໄດ້ຕາມຄາດໝາຍ.

6. ຮີບຮ້ອນປະເມີນຜົນໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງລັດທີ່ໄດ້ຮັບອະນຸຍາດ ໂດຍສະເພາະໂຄງການທີ່ບໍ່ມີປະສິດຜົນ, ບໍ່ປະຕິບັດພັນທະຕາມສັນຍາ, ດຳເນີນການຊັກຊ້າແລະຍັງເປັນການຈັບຈອງໄວ້; ມອບໃຫ້ລັດຖະບານມີມາດຕະການແກ້ໄຂຢ່າງເຂັ້ມງວດ ເພື່ອບໍ່ໃຫ້ລັດເສຍຜົນປະໂຫຍດແລະເສຍໂອກາດໃນການພັດທະນາ.

7. ມອບໃຫ້ລັດຖະບານຕິດຕາມກວດກາ ແລະ ປະເມີນໂຄງການສຳຫຼວດ, ຂຸດຄົ້ນແຮ່ທາດທີ່ໄດ້ຮັບອະນຸຍາດຜ່ານມາ ມີຄວາມຄືບໜ້າຊ້າ, ບໍ່ປະຕິບັດຕາມສັນຍາ, ສົ່ງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມສັງຄົມແລະທຳມະຊາດ ຕ້ອງນຳໃຊ້ມາດຕະການຕາມກົດໝາຍຢ່າງເດັດຂາດ, ພິຈາລະນາໂຈະໂຄງການແຮ່ທາດໃໝ່ທຸກປະເພດ (ແຮ່ໂລຫະ, ແຮ່ອະໂລຫະ ແລະ ແຮ່ຫີນທຸກຊະນິດທີ່ບໍ່ແມ່ນຫີນຮັບໃຊ້ໃນການກໍ່ສ້າງ).

8. ມອບໃຫ້ໃຫ້ລັດຖະບານເພີ່ມທະວີຄວາມເອົາໃຈໃສ່ໃນການແກ້ໄຂບັນຫາຕ່າງໆຂອງຂະແໜງການສຶກສາ ທີ່ຕິດພັນກັບບັນຫາການປະລະການຮຽນ, ການຂາດແຄນຄູສອນ, ການສອນຫ້ອງຄວບ, ການອຸດໜູນຄູສອນ ແລະ ແພດໝໍ ໃຫ້ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່; ຄົ້ນຄວ້າຈັດສັນງົບປະມານໃຫ້ແກ່ຂົງເຂດການສຶກສາ, ສາທາລະນະສຸກໃຫ້ສົມຄູ່ກັບຄວາມສຳຄັນຂອງວຽກງານ; ເອົາໃຈໃສ່ການບໍລິການດ້ານສາທາລະນະສຸກໃຫ້ແກ່ພໍ່ແມ່ປະຊາຊົນ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ ໂດຍສະເພາະແກ້ໄຂໜີ້ສິນ; ເພີ່ມທະວີຄວາມເຂັ້ມງວດຕາມກົດໝາຍໃນການຄຸ້ມຄອງຮ້ານບັນເທີງ.

9. ສືບຕໍ່ນຳໃຊ້ເຄື່ອງມືແລະລະບົບທັນສະໄໝໃນການເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ໃນລະດັບ 20% ຕໍ່ GDP ຂຶ້ນໄປ ໂດຍສະເພາະຈາກຖານລາຍຮັບທີ່ມີໃຫ້ຄົບຖ້ວນ ແລະ ຈາກສັນຍາການລົງທຶນ, ການເຊົ່າ-ສຳປະທານ ເປັນຕົ້ນພາສີ-ອາກອນແຮ່ທາດ, ນ້ຳມັນ, ລາຍຮັບທຸລະກິດຈາກທຸກພາກສ່ວນເສດຖະກິດ, ຄ່າເຊົ່າທີ່ດິນ, ການທ່ອງທ່ຽວ, ການຄ້າດິຈິຕອນ, ຄ່າທຳນຽມແລະບໍລິການຕ່າງໆ ພ້ອມທັງຫຼຸດຜ່ອນ ແລະ ຜ່ອນຜັນພາສີ-ອາກອນໃຫ້ໄດ້ຢ່າງເດັດຂາດ.

10. ເອົາໃຈໃສ່ຈັດສັນງົບປະມານຊົດເຊີຍເວນຄືນໃຫ້ແກ່ບັນດາໂຄງການລົງທຶນຂອງລັດທີ່ມີຜົນກະທົບໂດຍໄວ ໂດຍສະເພາະການຊົດເຊີຍໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງຊົນລະປະທານ, ເສັ້ນທາງ, ຕ້ານເຈື່ອນ ແລະ ອື່ນໆ.

11. ພິຈາລະນາຄົ້ນຄວ້ານະໂຍບາຍ ແລະ ໂຄງສ້າງລາຄາໄຟຟ້າ ທີ່ເຫັນວ່າລາຄາສູງເກີນໄປ ເຮັດໃຫ້ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ພາກທຸລະກິດ ເພື່ອສົ່ງເສີມການຜະ ລິດພາຍໃນ ແລະ ຮັກສາທຸລະກິດ, ໂຮງຈັກໂຮງງານຕ່າງໆ ບໍ່ໃຫ້ປິດຕົວລົງ.

12. ຄົ້ນຄວ້າເພີ່ມເງິນເດືອນ, ເງິນອຸດໜູນຂອງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໃຫ້ແທດເໝາະກັບສະພາບເສດຖະກິດໃນປັດຈຸບັນ ເພື່ອກະຕຸກຊຸກຍູ້ຄວາມຫ້າວຫັນໃນການປະຕິບັດໜ້າທີ່ວຽກງານ.

13. ເຫັນດີເປັນເອກະພາບໂດຍພື້ນຖານຕໍ່ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ IX (2021-2025).

14. ມອບໃຫ້ລັດຖະບານຄົ້ນຄວ້າຕື່ມ ວິໄສທັດ, ຍຸດທະສາດການພັດທະນາ, ບັນດາເປົ້າໝາຍ, ຄາດໝາຍ, ຕົວຊີ້ບອກຂອງແຕ່ລະແຜນວຽກຈຸດສຸມ, ກົນໄກ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ X (2026-2030) ໃຫ້ຈະແຈ້ງ, ຊັດເຈນ ແລະ ເປັນລະບົບ ໂດຍສະເພາະໃຫ້ຂະຫຍາຍແນວທາງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ອີງຕາມທ່າແຮງບົ່ມຊ້ອນຂອງປະເທດ ໂດຍຖືເອົາຂະແໜງກະສິກຳ ແລະ ປຸງແຕ່ງ ເປັນບຸລິມະສິດພື້ນຖານ ເພື່ອເຮັດໃຫ້ການພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ; ສຸມໃສ່ການຫັນເປັນດິຈິຕອນໃຫ້ສອດຄ່ອງຕາມຍຸກສະໄໝ ຕິດພັນກັບເສດຖະກິດດິຈິຕອນ, ເສດຖະກິດ 4.0 (AI) ເຂົ້າໃນແຜນການ 5 ປີ ຄັ້ງທີ X ໃຫ້ຈະແຈ້ງຊັດເຈນ.

15. ໃຫ້ລັດຖະບານສືບຕໍ່ຄົ້ນຄວ້າປັບປຸງແຜນການ 5 ປີ ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ເພື່ອກະກຽມສະເໜີຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

## ຮອດປັດຈຸບັນ...

(ຕໍ່ຈາກໜ້າ 1)

ການຜະລິດກະສິກຳເປັນສິນຄ້າເພື່ອຫັນປ່ຽນສັງຄົມບໍລິການໄປສູ່ສັງຄົມການຜະລິດ: ການຜະລິດລະດູແລ້ງຜ່ານມາ ປູກພືດສິນຄ້າໄດ້ 37,600 ກວ່າເຮັກຕາ (ຮຕ) ລື່ນແຜນການ 18%; ສຳເລັດການເຈລະຈາເປີດຕະຫຼາດກັບປະເທດຄູ່ຄ້າ ໂດຍສະເພາະ ສປຈີນ, ຫວຽດນາມ ແລະ ໄທ ປັດຈຸບັນມີ 74 ລາຍການເຈລະຈາ (ສັດ ມີ 4 ລາຍການ); ສົ່ງອອກໝາກມ່ວງໄປ ສປຈີນ ຄັ້ງປະຖົມມະລຶກໃນວັນທີ 30 ພຶດສະພາຜ່ານມາ ຈຳນວນ 90 ໂຕນ ແລະຄາດວ່າໃນປີນີ້ຈະສົ່ງອອກໄດ້ປະມານ 1,500 ໂຕນ ມູນຄ່າ 525,000 ໂດລາ ແລະ ໃນປີ 2026 ຈະສົ່ງອອກໄດ້ປະມານ 15ພັນໂຕນມູນຄ່າ5,250,000 ໂດລາ; ສົ່ງອອກທົດລອງເຂົ້າ, ກາເຟ ແລະ ໝາກໄມ້ອົບແຫ້ງໄປ ບຣູໄນ ຈຳນວນລວມ 50 ໂຕນ; ກະກຽມເຊັນສັນຍາສົ່ງອອກເຂົ້າໄປບັງກລາເທດ 2 ແສນໂຕນ/ປີ.

2. ການປຸງແຕ່ງຜະລິດຕະພັນກະສິກຳທີ່ສາມາດຜະລິດໄດ້ພາຍໃນ ໃຫ້ມີມູນຄ່າສູງຂຶ້ນຈາກການສົ່ງອອກວັດຖຸດິບ: ທົ່ວປະເທດມີໂຮງງານປຸງແຕ່ງມັນຕົ້ນ 22 ແຫ່ງ, ຄວາມຕ້ອງການມັນຕົ້ນດິບ ປະມານ 3.7 ລ້ານໂຕນ/ປີ, ມີຄວາມສາມາດຜະລິດແປ້ງມັນຕົ້ນ 978,000 ກວ່າໂຕນ/ປີ ເຮັດໃຫ້ສັດສ່ວນການສົ່ງອອກແປ້ງມັນຕົ້ນ ທຽບໃສ່ມູນຄ່າການສົ່ງອອກລວມ ເພີ່ມຂຶ້ນຈາກ 21% ໃນປີ 2021 ເປັນ 31% ໃນປີ 2024; ຈຳກັດການສົ່ງອອກເຂົ້າເປືອກທີ່ຍັງບໍ່ທັນໄດ້ຜ່ານການປຸງແຕ່ງ; ຊຸກຍູ້ການສ້າງຕັ້ງໂຮງງານຂ້າສັດທັນສະໄໝ ຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ຖ້າໂຮງງານເປີດນຳໃຊ້ ຈະສາມາດຂ້າສັດ (ງົວ-ຄວາຍ) ເພື່ອປຸງແຕ່ງເປັນຊີ້ນແຊ່ແຂງ ໄດ້ 3 ແສນກວ່າໂຕນ/ປີ; ສ້າງຕັ້ງໂຮງງານແປຮູບປາຊວາຍ ຢູ່ແຂວງຈຳປາສັກ ສົ່ງໄປ ສປຈີນ ເຊິ່ງສົ່ງອອກແລ້ວ 400 ກວ່າໂຕນ ແລະ ຈະສາມາດສົ່ງອອກໄດ້ປະມານ 6 ພັນໂຕນ/ປີ ໃນປີ 2025 ແລະ 20 ພັນໂຕນ ນັບແຕ່ປີ 2026 ເປັນຕົ້ນໄປ.

3. ການທົດແທນການນຳເຂົ້າ ແລະ ຮັບປະກັນການສ້າງຖານລາຍຮັບທີ່ເຂັ້ມແຂງ-ຍືນຍົງ: ໄດ້ອອກແຈ້ງການເກືອດຫ້າມການນຳເຂົ້າສິນຄ້າກະສິກຳທີ່ສາມາດຜະລິດໄດ້ພາຍໃນ ຢູ່ບັນດາດ່ານທ້ອງຖິ່ນ ແລະ ດ່ານປະເພນີ ເຊິ່ງໄດ້ກຳ ນົດ 5 ລາຍການສິນຄ້າຄື: ເຂົ້າ, ຊີ້ນ, ໄຂ່, ປາ ແລະພືດຜັກຈຳນວນໜຶ່ງ, ການນຳເຂົ້າຢູ່ບັນດາດ່ານທ້ອງຖິ່ນ ແລະດ່ານປະເພນີ ມູນຄ່າຫຼຸດລົງ 10 ລ້ານກວ່າໂດລາ; ແນວພັນເຂົ້າມີ 34 ພັນກວ່າໂຕນ ເທົ່າກັບ 74% ຂອງຄວາມຕ້ອງການຜະລິດເຂົ້າໃນລະດູນາປີ, ໃນຕົວຈິງ ການນຳໃຊ້ແນວພັນເຂົ້າຈາກແນວພັນທີ່ຜະລິດເປັນທາງການ ມີພຽງ20-30% ແລະຈຳນວນໜຶ່ງແມ່ນແນວພັນດີທີ່ຊາວກະສິກອນສາມາດຮັກສາໄວ້ເອງໄດ້ 1-2 ລະດູ, ແນວພັນພື້ນເມືອງອີກຈຳນວນໜຶ່ງ ເຊິ່ງຖືວ່າພຽງພໍ; ແນວພັນພືດ ຕອບສະໜອງໄດ້ 20% ຂອງຄວາມຕ້ອງການ, ແນວພັນສັດປີກ ຜະລິດໄດ້ 60% ຂອງແຜນການ, ແນວພັນປາຕອບສະໜອງໄດ້ 50% ຂອງຄວາມຕ້ອງການ; ມີໂຮງງານຜະລິດອາຫານສັດໃນທົ່ວປະເທດ 11 ແຫ່ງ, 4 ເດືອນຕົ້ນປີ ຜະລິດໄດ້ 178,000 ກວ່າໂຕນ ເທົ່າກັບ31%ຂອງຄວາມຕ້ອງການ; ທົ່ວປະເທດມີໂຮງງານຜະລິດຝຸ່ນ 106 ແຫ່ງ ຜະລິດໄດ້ 33,500 ກວ່າໂຕນ ແລະ ຊຸກຍູ້ສົ່ງເສີມໃຫ້ຊາວກະສິກອນຜະລິດຝຸ່ນ 350,000 ໂຕນ ກວມເອົາ 17.7% ຂອງຄວາມຕ້ອງການທັງໝົດທົ່ວປະເທດ 2 ລ້ານໂຕນຕໍ່ປີ ຫຼື ເທົ່າກັບ 35.3% ຂອງຄາດໝາຍທີ່ ສພຊ ຮັບຮອງ ໃຫ້ໄດ້ 50% ຂອງຄວາມຕ້ອງການໝົດ.

4. ການສົ່ງອອກສິນຄ້າກະສິກຳ ແລະ ປ່າໄມ້: 5 ເດືອນຕົ້ນປີ ປະຕິບັດໄດ້ 977 ລ້ານກວ່າໂດລາເທົ່າ65%ຂອງແຜນການ ສພຊ ຮັບຮອງ, ຄາດວ່າໝົດປີຈະບັນລຸໄດ້ລື່ນແຜນການ.

5. ທົ່ວປະເທດມີໂຄງການຊົນລະປະທານ 19,470 ໂຄງການ ສາມາດສະໜອງນ້ຳແກ່ເນື້ອທີ່ການຜະລິດໄດ້5ແສນກວ່າເຮັກຕາ(ລະດູຝົນ317,700 ກວ່າ ຮຕ, ລະດູແລ້ງ 182,400 ກວ່າ ຮຕ); ເພື່ອຂະຫຍາຍເນື້ອທີ່ຮັບນ້ຳຊົນລະປະທານແລະຮັບປະກັນການຕ້ານແລ້ງ, ໄດ້ດຳເນີນການໂຄງການຊົນລະປະທານຄື: ກຳລັງຈັດຕັ້ງປະຕິບັດການສຳຫຼວດ-ອອກແບບ 5 ໂຄງການ ຄາດຄະເນສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດໄດ້12,750 ກວ່າ ຮຕ, ກຳລັງສືບຕໍ່ກໍ່ສ້າງ 8 ໂຄງການຄາດຄະເນສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດໄດ້ 12,205 ກວ່າ ຮຕ; ກໍ່ສ້າງໃໝ່ງົບປະມານປີ 2025 ມີ 3 ໂຄງການຄາດຄະເນສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດໄດ້ 3,570 ກວ່າ ຮຕ, ໂຄງການກໍ່ສ້າງ ແລະ ສ້ອມແປງຊົນລະປະທານທົ່ງຮາບເຊບັ້ງໄຟ ແຂວງຄຳມ່ວນ ໄລຍະ III ມີ 10 ໂຄງການ ຄາດຄະເນສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດໄດ້ 2 ພັນກວ່າ ຮຕ.

6. ມາຮອດປັດຈຸບັນໄດ້ຂຶ້ນທະບຽນອອກໃບຕາດິນທົ່ວປະເທດ 2,112,007 ຕອນ ຫຼື ເທົ່າກັບ 70.4% ຂອງສຳມະໂນຕອນດິນທົ່ວປະເທດ ໃນນັ້ນ, ປີ 2021-2024 ໄດ້ສຳເລັດຂຶ້ນທະບຽນອອກໃບຕາດິນ 615,244 ຕອນ ເທົ່າກັບ 38.4% ຂອງແຜນການ 5 ປີ (1.6 ລ້ານຕອນ). ສຳລັບປີ 2025 ສູ້ຊົນອອກໃບຕາດິນ 3 ແສນຕອນ ໃນນັ້ນ, ເຂດໂຄງການ 236,280 ຕອນ ແລະ ເຂດນອກໂຄງການ 63,720 ຕອນ ເຊິ່ງໄດ້ມອບໃຫ້ບັນດາແຂວງ ແລະ ເມືອງ ຈັດຕັ້ງປະຕິບັດ; ມາຮອດເດືອນພຶດສະພາ 2025 ໄດ້ຂຶ້ນທະບຽນອອກໃບຕາດິນ 50,731 ຕອນ ຫຼື 17% ຂອງແຜນການ ແລະ ສຳເລັດການສຳຫຼວດ-ວັດແທກ ແລະ ຍັງລໍຖ້າອະນຸມັດໃບຕາດິນ 38,490 ຕອນ.

7. ໃນໄລຍະຜ່ານມາໄດ້ສຳເລັດການກວດກາໂຄງການເຊົ່າສຳປະທານທີ່ດິນລັດໃນ 17 ແຂວງ (ຍັງເຫຼືອນະຄອນຫຼວງວຽງຈັນ) ເຊິ່ງລວມມີ 2,547 ໂຄງການ(ກະສິກຳ-ປ່າໄມ້713, ບໍ່ແຮ່ 932, ພະລັງງານ 288, ບໍລິການທ່ອງທ່ຽວ 475, ອຸດສາຫະກຳ ແລະ ການຄ້າ 108, ຂຸດຄົ້ນແຮ່ຊາຍ 31) ໃນນັ້ນ, ໂຄງການທີ່ບໍ່ໄດ້ສຶກສາຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ 1,586 ໂຄງການ; ໂຄງການທີ່ບໍ່ໄດ້ອອກໃບອະນຸຍາດສິດນຳໃຊ້ທີ່ດິນ 643 ໂຄງການ, ຈາກການສັງລວມຂໍ້ມູນການເກັບລາຍຮັບການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ໃນ 14 ແຂວງທີ່ມີຂໍ້ມູນ ແມ່ນເກັບລາຍຮັບໄດ້ປະມານ 14.5 ລ້ານໂດລາສະຫະລັດ ແລະ 88 ຕື້ກີບ; ໂຄງການທີ່ບໍ່ມີປະສິດຜົນ ແມ່ນປະເມີນຈາກ 3 ເງື່ອນໄຂ ຄື: 1) ໂຄງການທີ່ບໍ່ຖອກພັນທະກວມ 80% ສ່ວນຫຼາຍແມ່ນໂຄງການບໍ່ແຮ່ທີ່ມອບເງິນແຕ່ຕອນເລີ່ມສັນຍາ ແລ້ວບໍ່ໄດ້ປະຕິບັດພັນທະການເຊົ່າ ແລະ ສຳປະທານແຕ່ລະໄລຍະ, 2) ໂຄງການທີ່ບໍ່ໄດ້ປະເມີນດ້ານສິ່ງແວດລ້ອມກວມ 62%, 3) ໂຄງການທີ່ບໍ່ທັນໄດ້ອອກເອກະສານນຳໃຊ້ທີ່ດິນລັດ ກວມ 25% ສ່ວນຫຼາຍແມ່ນໂຄງການຂຸດຄົ້ນແຮ່ທາດ, ໂຄງການພະລັງງານ, ໂຄງການກະສິກຳ, ໂຄງການທ່ອງທ່ຽວ; ໂຄງການທີ່ມີບັນຫາ ແລະ ປະຕິບັດບໍ່ສອດຄ່ອງກັບລະບຽບການທີ່ຈະຕ້ອງໄດ້ຊຸກຍູ້ ແລະແກ້ໄຂ 564 ໂຄງການ ໃນນີ້ບໍ່ໄດ້ເຄື່ອນໄຫວ 341 ໂຄງການ. ນອກຈາກນັ້ນ, ແມ່ນໂຄງການທີ່ໝົດສັນຍາ, ມີຂໍ້ຂັດແຍ້ງ, ຍົກເລີກສັນຍາແລ້ວ, ບໍ່ມີສັນຍາ ແລະ ອື່ນໆ.

## ປະຕິຮູບ...

(ຕໍ່ຈາກໜ້າ 1)

ບ່າຍວັນທີ 12 ມິຖຸນາຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ໄລຍະ 50 ປີຜ່ານມາ, ຂະແໜງພະລັງງານໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ນຳຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນທັງທາງກົງແລະທາງອ້ອມ ໂດຍສາມາດນຳໃຊ້ທ່າແຮງຈາກແຫຼ່ງນ້ຳເພື່ອສ້າງແຫຼ່ງຜະລິດໄຟຟ້າ 109 ແຫ່ງ ກຳລັງຕິດຕັ້ງ 12,235.84 MW ໃນນັ້ນ, ຊົມໃຊ້ພາຍໃນ 4,600 MW (37% ຂອງກຳລັງຕິດຕັ້ງ) ທຽບໃສ່ປີ 1975 ມີແຫຼ່ງຜະລິດໄຟຟ້າ 4 ແຫ່ງ ກຳລັງຕິດຕັ້ງ 33 MW ແລະ ສະໜອງໄຟຟ້າຊົມໃຊ້ໃນຄົວເຮືອນໄດ້ 3%, ປີ 2005 ປະຊາຊົນເຂົ້າເຖິງໄຟຟ້າໄດ້ຫຼາຍກວ່າ 96%, ສະເພາະປີ 2024 ລາຍຮັບຈາກການສົ່ງອອກມີມູນຄ່າ 2,655 ຕື້ໂດລາສະຫະລັດ (ເພີ່ມຂຶ້ນ 12% ຈາກປີ 2023). ສປປລາວ ຖືກຮັບຮູ້ຢ່າງກວ້າງ ຂວາງໃນພາກພື້ນວ່າເປັນປະເທດທີ່ຜະລິດພະລັງງານສະອາດ ແລະ ດຶງດູດການລົງທຶນເຂົ້າໃນການພັດທະນາອຸດສາຫະກຳ ແລະ ການບໍລິການ, ອັນພົ້ນເດັ່ນແມ່ນການພັດທະນາເຂດເສດຖະກິດພິເສດທີ່ມີນັກລົງທຶນມາຕັ້ງໂຮງຈັກ-ໂຮງງານເພາະມີພະລັງງານເພື່ອເຮັດການຜະລິດສົ່ງອອກ; ການພັດທະນາຂະແໜງພະລັງງານໄຟຟ້າໄດ້ສ້າງໂອກາດ, ຈຸດແຂງ ແລະ ຂໍ້ໄດ້ປຽບ ໃນການພັດທະນາປະເທດຕາມທິດສີຂຽວ ແລະ ຍືນຍົງ, ສາມາດສ້າງເສດຖະກິດປ່ອຍມົນລະພິດຕ່ຳ; ໃນອະນາຄົດ, ຍັງສາມາດບໍລິຫານຈັດການ ແລະ ນຳໃຊ້ຊັບພະຍາກອນນ້ຳ ຈາກອ່າງເກັບນ້ຳແລະການປ່ອຍນ້ຳເພື່ອພັດທະນາກະສິກຳ ແລະ ການທ່ອງທ່ຽວແບບຍືນຍົງ; ນຳໃຊ້ເຂດປ່າໄມ້ສະຫງວນຍອດນ້ຳເພື່ອສ້າງລາຍຮັບຈາກການຄ້າຊັບສິນກາກບອນ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ການພັດທະນາແຫຼ່ງພະລັງງານໄຟຟ້າໃນໄລຍະຜ່ານມາໄດ້ສ້າງບັນຫາໜັກໜ່ວງໃຫ້ແກ່ປະເທດເຮົາເຊັ່ນກັນ, ອັນພົ້ນເດັ່ນແມ່ນການສ້າງໜີ້ມະຫາສານຍ້ອນການກູ້ຢືມຈາກຕ່າງປະເທດເພື່ອມາພັດທະນາເຂື່ອນ, ສາຍສົ່ງ, ພື້ນຖານໂຄງລ່າງ ແລະ ລະບົບສະໜັບສະໜູນໃຫ້ແກ່ການຜະລິດ, ສົ່ງ ແລະ ຈຳໜ່າຍໄຟຟ້າ; ສິ່ງຜົນກະທົບຕໍ່ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນານາພັນ ເຊັ່ນ: ການທຳລາຍເນື້ອທີ່ປ່າ, ລະບົບນິເວດວິທະຍາ, ສັດປ່າ ແລະ ປາຫຼາຍຊະນິດ ມີຄວາມສ່ຽງສູນພັນ, ປະຊາຊົນສູນເສຍເນື້ອທີ່ທຳມາຫາກິນ; ເກີດອຸບັດເຫດເຄື່ອງພັງ ເຮັດໃຫ້ປະຊາຊົນເສຍຊີວິດ, ບ້ານເຮືອນແລະເຂດທຳມາຫາກິນຖືກທຳລາຍ; ເຂື່ອນໄຟຟ້າສ່ວນໃຫຍ່ ແມ່ນຂຶ້ນກັບການຄຸ້ມຄອງຂອງນັກລົງທຶນຕ່າງປະເທດຕາມສັນຍາໄລຍະຍາວ, ເຮັດໃຫ້ລັດຖະບານບໍ່ສາມາດບໍລິຫານຈັດການການສະໜອງພະລັງງານພາຍໃນ ແລະ ລາຍຮັບເງິນຕາ ໄດ້ດີເທົ່າທີ່ຄວນ.

ທ່ານ ມະໄລທອງ ກົມມະສິດ ລາຍງານໃຫ້ຮູ້ຕື່ມອີກວ່າ: ເພື່ອແກ້ໄຂຂໍ້ຄົງຄ້າງທີ່ຜ່ານມາ ແລະ ພັດທະນາຂະແໜງພະລັງງານໃຫ້ເຂັ້ມແຂງ, ຍືນຍົງ ແລະ ເພື່ອປະເທດຊາດ-ປະຊາຊົນໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະປະຕິບັດທິດທາງ ແລະ ມາດຕະການ ຄື: 1) ຄົ້ນຄວ້າ ແລະ ເຈລະຈາສັນຍາກັບຜູ້ພັດທະນາ ໂດຍສະເພາະສະເໜີປັບໂຄງສ້າງໜີ້, ຍືດໄລຍະຊຳລະໜີ້ ແລະ ຫຼຸດດອກເບ້ຍ; ສະເໜີປັບປຸງສັນຍາເພື່ອໃຫ້ລັດຖະບານສາມາດແບ່ງປັນລາຍໄດ້ຈາກການຂາຍໄຟຟ້າເພີ່ມຂຶ້ນ; 2) ໃຫ້ບຸລິມະສິດການສະໜອງພະລັງງານເພື່ອການຊົມໃຊ້ ແລະ ພັດທະນາອຸດສາຫະກຳພາຍໃນປະເທດ ໂດຍເພີ່ມສັດສ່ວນການສະຫງວນພະລັງງານໃນໂຄງການສ້າງໃໝ່ ໃຫ້ໄດ້ 20-30% ເພື່ອຫຼຸດການສົ່ງອອກ ແລະ ກະຕຸ້ນການລົງທຶນພັດທະນາອຸດສາຫະກຳ, ສ້າງນິຄົມອຸດສາຫະກຳບໍ່ຫ່າງຈາກໂຮງງານຜະລິດໄຟຟ້າເພື່ອຫຼຸດຜ່ອນຕົ້ນທຶນການສ້າງສາຍສົ່ງ, ຈຳກັດການສົ່ງອອກວັດຖຸດິບ ເພື່ອສົ່ງເສີມການພັດທະນາອຸດສາຫະກຳປຸງແຕ່ງແຮ່ທາດ ແລະ ກະສິກຳ; 3) ພັດທະນາພະລັງງານທາງເລືອກ ເພື່ອສົ່ງເສີມການພັດທະນາພະລັງງານແສງຕາເວັນ ແລະ ພະລັງງານລົມ ໃຫ້ຫຼາຍຂຶ້ນ, ສ້າງນະໂຍບາຍພິເສດສົ່ງເສີມການລົງທຶນ ແລະ ພັດທະນາລະບົບເກັບໄຟຈາກໄຟຟ້າແສງຕາເວັນ ແລະ ລົມ, ສົ່ງເສີມການພັດທະນາພະລັງງານຊີວະພາບຈາກພືດຕ່າງໆເຊັ່ນ: ນ້ຳມັນຈາກປາມ, ໝາກເຍົາ, ໝາກນ້ຳມັນ, ອ້ອຍ ແລະສິ່ງເສດເຫຼືອຈາກພືດ ແລະ ສັດ, ຮ່ວມມືກັບຕ່າງປະເທດເພື່ອພັດທະນາພະລັງງານໄຮໂດຼເຈັນ ແລະ ນິວເຄຼຍ; 4) ດຶງດູດ ແລະ ຄັດເລືອກນັກລົງທຶນທີ່ດີ ເພື່ອຮ່ວມມືກັບລັດຖະບານ ພັດທະນາໂຄງການພະລັງງານ ໂດຍສົ່ງເສີມການຮ່ວມລົງທຶນໂຄງການພັດທະນາພະລັງງານ ໂດຍລັດວິສາຫະກິດ ຫຼື ເອກະຊົນພາຍໃນຖືຮຸ້ນຢ່າງໜ້ອຍ 30%, ສ້າງນະໂຍບາຍພິເສດເພື່ອສົ່ງເສີມການລົງທຶນຜະລິດພະລັງງານສະໜອງໃຫ້ອຸດສາຫະກຳພາຍໃນ ໂດຍສະເພາະອຸດສາຫະກຳປຸງແຕ່ງລະບົບຕ່ອງໂສ້ການຜະລິດ; 5) ອຳນວຍຄວາມສະດວກ, ຊຸກຍູ້ ແລະ ຊ່ວຍເຫຼືອ ເພື່ອເລັ່ງພັດທະນາໂຄງການພະລັງງານທີ່ໄດ້ສຶກສາ ຫຼື ສຳປະທານແລ້ວ; ຫຼຸດຜ່ອນຂັ້ນຕອນ, ຄວາມຫຍຸ້ງຍາກ ແລະ ສ້າງເງື່ອນໄຂທີ່ອຳນວຍໃຫ້ບັນດາໂຄງການທີ່ລັດຖະບານໄດ້ອະນຸມັດ ໃຫ້ດຳເນີນໄປຕາມແຜນການ ຫຼື ໄວຂຶ້ນ; ປຶກສາຫາລື ເພື່ອໃຫ້ບັນດາໂຄງການທີ່ມີທ່າແຮງ ສາມາດເຂົ້າເຖິງແຫຼ່ງທຶນຈາກພາຍໃນ ຫຼື ຕ່າງປະເທດ ເພື່ອພັດທະນາພະລັງງານສະໜອງພາຍໃນ; 6) ປະຕິຮູບລະບົບການເງິນ ແລະ ການບໍລິຫານ ໂດຍສ້າງລະບົບທັນສະໄໝເພື່ອຕິດຕາມ ແລະ ຄວບຄຸມການເກັບລາຍຮັບຈາກການຂາຍພະລັງງານໃນຕະຫຼາດພາຍໃນ ແລະ ສົ່ງອອກ, ເປີດເຜີຍສັນຍາໂຄງການລົງທຶນດ້ານພະລັງງານໄຟຟ້າໃຫ້ໜ່ວຍງານທີ່ເຮັດບົດບາດຕິດຕາມກວດກາສັນຍາໂຄງການທີ່ລັດຖະບານ ແລະ ສະພາແຫ່ງຊາດ ຕົກລົງເຫັນດີເປັນເອກະພາບ, ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດການກວດສອບ ແລະ ກວດກາ ໃນຂົງເຂດໂຄງການຜະລິດ ແລະ ຈຳໜ່າຍພະລັງງານ; 7) ປະຕິຮູບລັດວິສາຫະກິດໄຟຟ້າລາວ ແລະ ບໍລິສັດລູກ ໃຫ້ມີຄວາມຄືບໜ້າໄວຂຶ້ນຕາມແຜນປະຕິຮູບທີ່ລັດຖະບານໄດ້ຮັບຮອງ ເປັນຕົ້ນ: ແຜນປັບປຸງພາຍໃນ ໂດຍສະເພາະການຫຼຸດລາຍຈ່າຍ, ຫຼຸດການສູນເສຍພະລັງງານ, ຫຼຸດພະນັກງານ, ປັບປຸງລະບົບບັນຊີ-ການເງິນ, ແກ້ໄຂບັນຫາຄວາມໂປ່ງໃສ; ປັບໂຄງສ້າງໜີ້ ໂດຍເຈລະຈາກັບເຈົ້າໜີ້, ຕັດສິນໃຈແກ້ໜີ້ບໍ່ເກີດດອກອອກຜົນ ແລະ ແຍກຊັບສິນດີ ແລະ ບໍ່ດີ; ປັບປຸງໂຄງສ້າງລາຄາພາກຊື້ ໂດຍເຈລະຈາລາຄາຊື້ໄຟຟ້າໃຫ້ຕ່ຳລົງຕື່ມ, ປັບປຸງໂຄງສ້າງລາຄາພາກຂາຍ ໂດຍຄ່ອຍຂຶ້ນລາຄາໄຟຟ້າ ເພື່ອໃຫ້ສ່ອງແສງເຖິງຕົ້ນທຶນຕົວຈິງ; ເລັ່ງຈັດຕັ້ງປະຕິບັດໂຄງການລົງທຶນທີ່ມີປະສິດທິຜົນສູງທາງດ້ານເສດຖະກິດ ເພື່ອສ້າງແຫຼ່ງລາຍຮັບໃໝ່ໃຫ້ແກ່ບໍລິສັດ.

ທິດທາງໃນຕໍ່ໜ້າ ຕ້ອງສ້າງການຫັນປ່ຽນຈາກການເປັນ "ໝໍ້ໄຟໃຫ້ແກ່ກຳໄລຂອງຕ່າງປະເທດ" ມາເປັນ "ເສດຖະກິດທີ່ມີອຸດສາຫະກຳເຂັ້ມແຂງດ້ວຍພະລັງງານຕົນເອງ" ຕາມທິດເສດຖະກິດເອກະລາດເປັນເຈົ້າຕົນເອງ ໂດຍການເຈລະຈາໜີ້ສິນ, ໃຫ້ບຸລິມະສິດແກ່ການສ້າງອຸດສາຫະກຳພາຍໃນ, ສ້າງຄວາມຫຼາກຫຼາຍທາງດ້ານການຜະລິດພະລັງງານ ແລະ ສ້າງໂຄງການລົງທຶນແບ່ງປັນຜົນປະໂຫຍດທີ່ກຸ້ມຄ່າ-ເປັນທຳ.




# ລະວັງ! ຍຸດທະສາດ ການຫັນປ່ຽນໂດຍສັນຕິ

**# ທິດດີ**

ໃນຍຸກແຫ່ງຂໍ້ມູນຂ່າວສານຄືປັດຈຸບັນ ໄດ້ເກີດມີແຫຼ່ງຂ່າວຫຼວງຫຼາຍປາກົດຕົວຂຶ້ນໃນສື່ອອນລາຍ. ສະນັ້ນ, ຫາກເຮົາບໍ່ມີສະຕິໃນການຮັບຂໍ້ມູນເຫຼົ່ານັ້ນຈະເຮັດໃຫ້ສັບສົນບໍ່ຮູ້ວ່າອັນໃດເປັນຂ່າວແທ້ ຂ່າວປອມ, ທ້າຍທີ່ສຸດອາດຕົກເປັນເຫຍື່ອຂອງຍຸດທະສາດຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະປັກ ທີ່ຫວັງໂຄ່ນລົ້ມໂຈມຕີລະບອບພວກເຮົາ; ເພື່ອບໍ່ໃຫ້ຕົກເປັນເຫຍື່ອ ພວກເຮົາຕ້ອງກຳໃຫ້ໄດ້ວ່າ: ຍຸດທະສາດຫັນປ່ຽນໂດຍສັນຕິແມ່ນຫຍັງ? ຍຸດທະສາດຫັນປ່ຽນໂດຍສັນຕິ ແມ່ນຮູບການໜຶ່ງຂອງການຕໍ່ສູ້ຊົນຊັ້ນທີ່ຂ້ຽວຂາດເອົາເປັນເອົາຕາຍ ລະຫວ່າງລັດທິຈັກກະພັດ ແລະ ສັງຄົມນິຍົມ ໃນເມື່ອກ່ອນ. ຕາມຂໍ້ມູນຂອງຫຼາຍເອກະສານໃຫ້ຮູ້ວ່າ: ໃນເດືອນມັງກອນ 1953 ລັດຖະມົນຕີກະຊວງການຕ່າງປະເທດອາເມລິກາ ໄດ້ຖະແຫຼງວ່າ: ການທັບມ້າງປະເທດສັງຄົມນິຍົມ ສາມາດເຮັດໄດ້ດ້ວຍວິທີສັນຕິວິທີ ຄືນຳໃຊ້ວິທີທາງດ້ານຈິດຕະສາດ, ເພື່ອບັນລຸເປົ້າໝາຍສົມທົບວິທີການຕ່າງໆນັ້ນ ນັບທັງດ້ານການທະຫານ. "ນັ້ນຄືຈຸດເລີ່ມຕົ້ນຂອງຍຸດທະສາດຫັນປ່ຽນໂດຍສັນຕິ". ຈາກນັ້ນ, ບໍ່ພໍເທົ່າໃດປີ ເຂົາກໍເຮັດທົດລອງກັບປະເທດຮົງກາລີ ປີ 1956, ເຊັກໂກສະໂລວາກີ ປີ 1968, ໂປໂລຍ ປີ 1980, ສະຫະພາບໂຊຫວຽດ ປີ 1991 ແລະແລ້ວທັງໝົດລະບົບສັງຄົມນິຍົມໂລກກໍແຕກສະຫຼາຍ.

ຍຸດທະສາດຫັນປ່ຽນໂດຍສັນຕິ ແມ່ນການຕໍ່ສູ້ທີ່ດຳເນີນຢູ່ພາຍໃນປະເທດໃດໜຶ່ງ ທີ່ບໍ່ເດີນຕາມເສັ້ນທາງຂອງມະຫາອຳນາດຕາເວັນຕົກ ເຊິ່ງວິທີການຕົ້ນຕໍແມ່ນໃຊ້ຈິດຕະວິທະຍາເພື່ອຊວນເຊື່ອໃຫ້ປະລະທາດແທ້ ແລະ ອຸດົມການ, ແບ່ງແຍກຄວາມສາມັກຄີພາຍໃນເຊິ່ງສ່ວນຫຼາຍແມ່ນຜ່ານສື່ຕ່າງໆ ໂດຍສະເພາະສື່ອອນລາຍ.

ການດຳເນີນຍຸດທະສາດຫັນປ່ຽນໂດຍສັນຕິໃນທີ່ຜ່ານມາຢູ່ແຕ່ລະປະເທດ ສ່ວນຫຼາຍແມ່ນຜ່ານສອງບາດກ້າວເຊັ່ນ: ບາດກ້າວທີໜຶ່ງສ້າງການຫັນປ່ຽນ ແລະຜັນແຍກຢູ່ພາຍໃນ, ສ້າງວິກິດການດ້ານເສດຖະກິດກ້າວໄປເຖິງວິທີທາງການເມືອງເພື່ອປຸກລະດົມມະຫາຊົນຕໍ່ສູ້ເພື່ອທວງເອົາປະຊາທິປະໄຕຫຼາຍພັກ, ຫຼາຍເຄົ້າ; ທວງໃຫ້ແກ້ໄຂຊີວິດການເປັນຢູ່ທີ່ເກີນຄວາມສາມາດຕົວຈິງຂອງອຳນາດການປົກຄອງ ກ້າວໄປສ້າງເສດຖະກິດຕາມທ່າອຽງທຶນນິຍົມຂອງປະເທດມະຫາອຳນາດ. ບາດກ້າວທີສອງ ໃນເມື່ອຫັນປ່ຽນບໍ່ໄດ້ຮັບຜົນ ຫຼື ບໍ່ບັນລຸລະດັບໃດໜຶ່ງ, ເມື່ອມີໂອກາດອຳນວຍຈະປຸກລະດົມຂະບວນການລຸກຮື້ຂຶ້ນໂຄ່ນລົ້ມລະບອບການປົກຄອງ ຫຼື ດ້ວຍຮູບການລັດຖະປະຫານ.

ເຖິງແມ່ນວ່າສະຖານະການຂອງໂລກຈະປ່ຽນໄປແນວໃດກໍຕາມ, ແຕ່ບັນດາອິດທິກຳລັງປໍລະປັກກໍຍັງຄົງສືບຕໍ່ດຳເນີນຍຸດທະສາດຫັນປ່ຽນໂດຍສັນຕິ ບໍ່ມີຫຍັງປ່ຽນແປງ; ກົງກັນຂ້າມ, ຍິ່ງເພີ່ມທະວີ ໂດຍກໍ່ໃຫ້ເກີດປັດໄຈ ແລະ ເງື່ອນໄຂຈາກພາຍໃນເພື່ອລໍຖ້າໂອກາດອັນສຸກງອມ ແລ້ວກໍຊຸກຍູ້ປຸກລະດົມການລຸກຮື້ຂຶ້ນແຮ່ຂະບວນປະທ້ວງ ແລະ ໂຄ່ນລົ້ມຜູ້ນຳ ຫຼື ລະບອບການເມືອງຂອງປະເທດນັ້ນ. ອັນນີ້ແມ່ນເປົ້າໝາຍສູງສຸດຂອງພວກເຂົາ ເຊິ່ງໄດ້ຮັບຜົນສຳເລັດມາແລ້ວຢູ່ບາງປະເທດໃນເຂດຕາເວັນອອກກາງ ແລະອາຟຣິກາເໜືອ.

ໃນຍຸກແຫ່ງຂໍ້ມູນຂ່າວສານ, ການປາກົດຕົວຂອງສື່ອອນລາຍ ຕ້ອງຍອມຮັບວ່າເປັນແຫຼ່ງກະຈາຍທີ່ສຳຄັນຂອງຍຸດທະສາດຫັນປ່ຽນໂດຍສັນຕິ. ສະນັ້ນ, ການເສບສື່ໃນປັດຈຸບັນ ມັນຮຽກຮ້ອງໃຫ້ທຸກຄົນໃນສັງຄົມ ຕ້ອງມີສະຕິ ແລະ ພິຈາລະນາວ່າອັນໃດຄວນເຊື່ອ ແລະ ອັນໃດຄວນປະຕິເສດ; ໄປຄຽງຄູ່ກັນນັ້ນ, ກໍຕ້ອງມີການອະທິບາຍຕໍ່ທຸກບັນຫາທີ່ສັງຄົມຕັ້ງຂຶ້ນຜ່ານສື່ອອນລາຍ, ທຸກບັນຫາມີທາງອອກ ເຮົາບໍ່ອະທິບາຍ ຜູ້ອື່ນກໍອະທິບາຍ, ເຮົາບໍ່ກຳເອົາ ຜູ້ອື່ນກໍກຳເອົາ ຂໍສະເໜີເປັນການແລກປ່ຽນນໍ!




# ວິທີເຮັດວຽກ

**ພາກທີ 7**

**ບັນຫາພະນັກງານ**

ພວກເຮົາບໍ່ຢ້ານວ່າຈະມີຂໍ້ຜິດພາດ ແລະ ບົກພ່ອງ. ພວກເຮົາຢ້ານ ແຕ່ບໍ່ຍອມອົດທົນແກ້ໄຂຂໍ້ຜິດພາດ ຂໍ້ບົກພ່ອງເທົ່ານັ້ນ ແລະ ຢ້ານແຕ່ຜູ້ນຳພາບໍ່ຮູ້ຊອກວິທີອັນຖືກຕ້ອງເພື່ອຊ່ວຍພະນັກ ງານແກ້ໄຂຂໍ້ບົກພ່ອງ ແລະ ຂໍ້ຜິດພາດເທົ່ານັ້ນ.

ນອກຈາກພວກທີ່ມີນຳໃຈ ຢາກມ້າງເພພັກຂອງພວກເຮົາໄປແລ້ວ, ບໍ່ມີໃຜດອກຈະຕັ້ງໃຈຈະເຮັດໃຫ້ຜິດພາດ, ມັນມີການຜິດພາດກໍຍ້ອນວ່າພະນັກງານບໍ່ເຂົ້າໃຈ ແລະ ບໍ່ຮູ້. ເພາະສະນັ້ນກ່ຽວກັບພະນັກງານທີ່ຜິດພາດນັ້ນ, ພວກເຮົາບໍ່ຄວນຖືວ່າເຂົາເຈົ້າເຮັດໃຫ້ເປັນແນວນັ້ນ. ກົງກັນຂ້າມ, ພວກເຮົາຄວນໃຊ້ທ່າທີອັນສະໜິດສະໜົມ ຊ່ວຍໃຫ້ເຂົາເຈົ້າຊອກຈົນເຫັນເຫດທີ່ພາໃຫ້ເຂົາເຈົ້າມີຄວາມຜິດພາດນັ້ນ, ໃຫ້ເຂົາເຈົ້າເຫັນຄັກວ່າຂໍ້ຜິດພາດແນວນັ້ນຈະ ເສຍຫາຍເຖິງວຽກການ, ເຖິງພັກເຖິງປະເທດຊາດ ແລະ ເຖິງປະຊາຊົນແນວໃດ, ເຮັດແນວໃດຈຶ່ງຈະແກ້ໄຂໄດ້. ລວມຄວມວ່າ ພວກເຮົາຕ້ອງຕຳໜິເຂົາເຈົ້າຢ່າງຖືກຕ້ອງ.

ຖ້າພວກເຮົາຢາກໃຫ້ເຂົາເຈົ້າຕັ້ງໃຈແກ້ໄຂນັ້ນ, ພວກເຮົາຕ້ອງຊີ້ແຈງຄັກແນ່, ເຮັດໃຫ້ເຂົາເຈົ້າມອງເຫັນຂໍ້ຜິດພາດນັ້ນເອົາເອງ, ຍອມຮັບສາລະພາບເອງ, ໃຫ້ເຂົາເຈົ້າຍິນດີແກ້ໄຂ. ບໍ່ແມ່ນບີບບັງຄັບໃຫ້ເຂົາເຈົ້າແກ້ໄຂ. ການແກ້ໄຂຂໍ້ບົກພ່ອງນັ້ນສ່ວນໜຶ່ງ ແມ່ນພະນັກງານເອງເປັນຜູ້ຮັບຜິດຊອບເຮັດ, ນັ້ນແມ່ນເປັນຄວາມຈິງແຕ່ສ່ວນໜຶ່ງ. ມັນກໍເປັນໜ້າທີ່ຂອງຜູ້ນຳທີ່ຈະຕ້ອງເຮັດໃຫ້ເຂົາ ເຈົ້າແກ້ໄຂຈົນໄດ້.

ອ່ານຕໍ່ສະບັບໜ້າ...



## ປັບປຸງ...

(ຕໍ່ຈາກໜ້າ 1)

ໃນສັນຍາສຳປະທານໂຄງການ ຕ້ອງກຳນົດໃຫ້ລະອຽດຈະແຈ້ງເຖິງການແບ່ງຄວາມຮັບຜິດຊອບຂອງສູນກາງ ແລະ ທ້ອງຖິ່ນ ລວມທັງການມີສ່ວນຮ່ວມຂອງຂະແໜງການອື່ນທີ່ກ່ຽວຂ້ອງ; ປະເມີນຜົນການປະຕິບັດສັນຍາສຳປະທານແລະເອກະສານຊ້ອນທ້າຍໂຄງການທີ່ພົວພັນກັບການຊົດເຊີຍທົດແທນຄ່າເສຍຫາຍ, ການຟື້ນຟູປ່າ, ການປູກໄມ້ທົດແທນ, ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຮັບປະກັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ; ປະຕິບັດມາດຕະການເດັດຂາດຕໍ່ໂຄງການລົງທຶນທີ່ໄດ້ຮັບອະນຸຍາດ ແຕ່ບໍ່ມີການພັດທະນາໂຄງການ, ໂຄງການທີ່ດຳເນີນງານບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

2. ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາ ແລະ ປະເມີນການມອບເງິນພັນທະຕ່າງໆ ຂອງຜູ້ພັດທະນາໂຄງການ ໂດຍໃຫ້ສອດຄ່ອງກັບກົດໝາຍ, ສັນຍາສຳປະທານ, ເອກະສານຊ້ອນທ້າຍຂອງໂຄງການ; ຫຼຸດຜ່ອນການສະເໜີຂໍຍົກເວັ້ນແລະຜ່ອນຜັນການປະຕິບັດບາງເນື້ອໃນບາງມາດຕາຂອງກົດໝາຍທີ່ພົວພັນກັບການປະຕິບັດພັນທະດ້ານພາສີ, ອາກອນ; ເພື່ອເພີ່ມລາຍຮັບເຂົ້າງົບປະມານຂອງລັດ: ຄົ້ນຄວ້າປັບປຸງ ແລະ ກຳນົດອັດຕາອາກອນກຳໄລຈາກໂຄງການໄຟຟ້າພະລັງງານລົມ, ພະລັງງານແສງຕາເວັນ ແລະພະລັງງານໄຟຟ້າອື່ນໃຫ້ແທດເໝາະກັບໄລຍະເວລາການດຳເນີນງານຂອງໂຄງການ (ຜ່ານມາແມ່ນ 7% ຕາມກົດໝາຍອາກອນລາຍໄດ້ທີ່ນຳໃຊ້ໃນປັດຈຸບັນ).

3. ການພັດທະນາພະລັງງານໄຟຟ້າ ຕ້ອງເລັ່ງໃສ່ຮັບປະກັນການສະໜອງໄຟຟ້າໃຫ້ສອດຄ່ອງກັບຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ກໍຄືຮັບປະກັນການຕອບສະໜອງຄວາມຕ້ອງການຂອງປະຊາຊົນ; ການວາງແຜນການພັດທະນາພະລັງງານໄຟຟ້າ ຕ້ອງໃຫ້ສົມຄູ່, ສອດຄ່ອງ ແລະ ໄປຄຽງຄູ່ກັບການພັດທະນາຂະແໜງການອື່ນທີ່ກ່ຽວຂ້ອງ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າຮ່ວມແຕ່ຫົວທີ ເພື່ອຮັບປະກັນຜົນປະໂຫຍດລວມຮ່ວມກັນ ແລະແນໃສ່ຫຼຸດຜ່ອນການນຳເຂົ້າໄຟຟ້າຈາກຕ່າງປະເທດ.

4. ການເກັບກຳຂໍ້ມູນ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຕ້ອງລະອຽດຊັດເຈນ, ປະຊາຊົນທີ່ຖືກຜົນກະທົບຕ້ອງມີສ່ວນຮ່ວມ ແລະ ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງກົມກຽວຕໍ່ເນື່ອງ; ທົບທວນຄືນບັນດາໂຄງການໄຟຟ້າທີ່ຢູ່ໃນແຜນພັດທະນາຫຼືກຳລັງດຳເນີນການສຶກສາ ໃຫ້ເໝາະສົມ, ຮັບປະກັນບໍ່ໃຫ້ມີການທັບຊ້ອນກັບໂຄງການພັດທະນາອື່ນ.

5. ປະເມີນຄືນ, ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ຈະແຈ້ງ, ຮັດກຸມ ແລະສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ; ປັບປຸງຂອດປະສານງານໃຫ້ມີຄວາມກົມກຽວ ທັງຄົ້ນຄວ້າ ແລະ ກຳນົດເອົາພະລັງງານທົດແທນອື່ນເຊັ່ນ: ພະລັງງານລົມ, ພະລັງງານແສງຕາເວັນ ແລະ ອື່ນໆ ເຂົ້າໃນກົດໝາຍວ່າດ້ວຍໄຟຟ້າ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຕົວຈິງ.

6. ລົງທຶນ ແລະ ລະດົມທຶນ ເຂົ້າໃນການກໍ່ສ້າງສາຍສົ່ງໄຟຟ້າແຮງສູງແຕ່ເໜືອຮອດໃຕ້ ໃຫ້ສາມາດຮອງຮັບເອົາກະແສໄຟຈາກເຂື່ອນຕ່າງໆ ເພື່ອສົ່ງອອກ ແລະ ຊົມໃຊ້ພາຍໃນ; ພິຈາລະນາລວມເອົາສາຍສົ່ງໄຟຟ້າໄປຕ່າງປະເທດ ເຂົ້າໃນລະບົບດັ່ງກ່າວ, ບໍ່ຄວນອະນຸຍາດໃຫ້ບັນດາໂຄງການລົງທຶນກໍ່ສ້າງສາຍສົ່ງໄຟຟ້າເປັນຂອງຕົນເອງ ພ້ອມທັງຄົ້ນຄວ້າສ້າງນິຕິກຳຄຸ້ມຄອງວຽກງານດັ່ງກ່າວໃຫ້ສຳເລັດ.

7. ປັບປຸງລະບົບພະລັງງານໄຟຟ້າໃຫ້ມີຄວາມໝັ້ນຄົງ ມີຄວາມພ້ອມໃນການສະໜອງໄຟຟ້າໃຫ້ພຽງພໍຕໍ່ຄວາມຕ້ອງການທັງພາຍໃນ ແລະ ສົ່ງອອກຕ່າງປະເທດ ໂດຍການພິຈາລະນາພັດທະນາໄຟຟ້າພະລັງງານຄວາມຮ້ອນຫຼືພະລັງງານໄຟຟ້າອື່ນ ເພື່ອຮັບປະກັນການພັດທະນາລະບົບພະລັງງານໄຟຟ້າໃຫ້ມີຄວາມສະຖຽນ, ໝັ້ນຄົງ ແລະ ຜູ້ຊົມໃຊ້ສາມາດເຂົ້າເຖິງດ້ວຍລາຄາທີ່ເໝາະສົມ, ເປັນທຳ.

8. ສືບຕໍ່ຄົ້ນຄວ້າປັບປຸງຍຸດທະສາດການພັດທະນາພະລັງງານໄຟຟ້ານ້ຳຕົກ ຈະຄວນສຸມໃສ່ທິດທາງໃດເປັນຕົ້ນຕໍ ເພື່ອໃຫ້ມີການປະສານສົມທົບກັນຢ່າງກົມກຽວລະຫວ່າງເສດຖະກິດ, ສິ່ງແວດລ້ອມແລະສັງຄົມ; ຢຸດຕິການກໍ່ສ້າງເຂື່ອນໄຟຟ້າພະລັງງານນ້ຳຂະໜາດນ້ອຍ, ຫຼຸດຜ່ອນການພັດທະນາພະລັງງານໄຟຟ້າຈາກເຂື່ອນໄຟຟ້ານ້ຳຕົກ ແລະຫັນໄປສູ່ພະລັງງານໄຟຟ້າ, ພະລັງງານທົດແທນໃນຮູບແບບອື່ນ; ຄົ້ນຄວ້າປັບປຸງໂຄງສ້າງລາຄາໄຟຟ້າ ຕ້ອງໃຫ້ສອດຄ່ອງກັບສະພາບການດຳລົງຊີວິດຂອງປະຊາຊົນ ແລະ ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ.

9. ແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງຄື: ກະຊວງອີງການຂັ້ນສູນກາງ ດຳເນີນໜ້າທີ່ຄຸ້ມຄອງມະຫາພາກ, ມອບຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການ ໃຫ້ຄະນະພັກອົງການປົກຄອງທ້ອງຖິ່ນ, ສະພາປະຊາຊົນຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ.

10. ສ້າງ ແລະ ຍົກລະດັບບຸກຄະລາກອນໃນຂະແໜງການໄຟຟ້າ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຊຳນານງານ ເພື່ອກະກຽມຄວາມພ້ອມໃນການຄຸ້ມຄອງ ແລະບໍລິຫານຈັດການບັນດາໂຄງການພະລັງງານໄຟຟ້ານ້ຳຕົກ ທີ່ຈະສົ່ງມອບຄືນໃຫ້ລັດຖະບານ ພາຍຫຼັງສິ້ນສຸດອາຍຸສັນຍາສຳປະທານໂຄງການ.



## ສຸກສະບາຍຫາຍໂຣຄາ

# ພູມແພ້ອາກາດ

# ຮຽບຮຽງໂດຍ: ທິວກະທີ



ອາການພູມແພ້ອາກາດ ຫຼື ໂລກພູມແພ້ອາກາດ (Allergic Rhinitis) ເປັນອາການທີ່ລົບກວນການໃຊ້ຊີວິດປະຈຳວັນຂອງຫຼາຍໆທ່ານ ເພາະຈະມີອາການຈາມ, ຕັນດັງ ແລະ ຄັນຕາມຜິວໜັງ ເຊິ່ງເກີດຈາກໂຕກະຕຸ້ນໃນຮ່າງກາຍຕອບສະໜອງຕໍ່ສານທີ່ຮ່າງກາຍຮັບເຂົ້າມາເຊັ່ນ: ຝຸ່ນລະອອງ, ຂົນສັດ, ລະອອງຂອງພືດ... ເຊິ່ງອາການຂອງແຕ່ລະຄົນນັ້ນຈະມີປະຕິກິລິຍາທີ່ແຕກຕ່າງກັນອອກໄປ ບາງທ່ານຫາຍໃຈຝືດ, ຕັນດັງ, ຄັນຕາ, ອອກຕຸ່ມ ຫຼື ບາງທ່ານອາດຈະຮຸນແຮງເກີດມີອາການຕ່ອມໃຕ້ຜິວໜັງໃຄ່ກະທັນຫັນເຊິ່ງອາດເຖິງແກ່ຊີວິດໄດ້. ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມາຮູ້ຈັກກັບໂລກພູມແພ້ອາກາດ ແລະ ວິທີການປ້ອງກັນເພື່ອບໍ່ໃຫ້ມັນກັບມາເປັນອີກ.

ອາການໂລກພູມແພ້ອາກາດຂອງແຕ່ລະຄົນນັ້ນ ແຕກຕ່າງກັນອອກໄປ ແຕ່ມີອາການທີ່ຄ້າຍຄືກັນຢ່າງໃດຢ່າງໜຶ່ງ ຫຼື ເກີດພ້ອມກັນຫຼາຍຢ່າງ ດັ່ງນີ້:

- ດັງອັກເສບ, ຕັນດັງ, ຄັນດັງ-ຈາມ, ນ້ຳມູມໄຫຼລົງຄໍ ໃນຊ່ວງຜັດປ່ຽນລະດູ ໂດຍສະເພາະໃນຊ່ວງໄລຍະທີ່ມີຝຸ່ນລະອອງໃນອາກາດຫຼາຍ ຫຼື ບາງທ່ານເປັນຕະຫຼອດປີ;
- ຜື່ນແພ້ທາງກຳມະພັນ ເຊິ່ງພົບຫຼາຍທີ່ສຸດໃນເດັກນ້ອຍ ຈະມີອາການຄັນບໍລິເວນແຂນພັບ ແລະ ຂາພັບ;
- ຜື່ນລົມເປັນຜົດ ຜິວໜັງມີລັກສະນະເປັນຕຸ່ມນູນແດງ ແລະ ໜາຂຶ້ນ;
- ເຫຍື່ອຫຸ້ມຕາອັກເສບ ຈະມີອາການຄັນບໍລິເວນດວງຕາ, ມີນ້ຳຕາໄຫຼ ຫຼື ຕາບວມ;
- ຫາຍໃຈບໍ່ອອກກະທັນຫັນ, ໜ້າແດງ, ດັງບວມແດງ ແລະ ຫາກມີອາການວິນຫົວປວດຮາກ ຫາຍໃຈມີສຽງວີດ ອາດຈະນຳໄປສູ່ອາການຄວາມດັນຫຼຸດ ແລະ ເປັນອັນຕະລາຍເຖິງແກ່ຊີວິດໄດ້.

ການໃຊ້ຊີວິດຮ່ວມກັບຜູ້ທີ່ເປັນພູມແພ້ຕ້ອງເຂົ້າໃຈພື້ນຖານຂອງການແພ້ ແລະ ກຳຈັດສິ່ງທີ່ກໍ່ໃຫ້ເກີດພູມແພ້ອອກຈາກສະພາບແວດລ້ອມທີ່ຢູ່ອາໄສ ຫຼືກລ່ຽງການສຳຜັດກັບສິ່ງກະຕຸ້ນເຊັ່ນ: ລະອອງເກສອນ, ບໍລິເວນຮ້ອນ-ເຢັນທີ່ມີການປ່ຽນແປງຢ່າງໄວວາ; ເບິ່ງແຍງດູແລຕົນເອງຢ່າງເໝາະສົມເພື່ອຊ່ວຍໃຫ້ຄົນທີ່ມີອາການພູມແພ້ອາກາດຢູ່ຮ່ວມກັນໃນສະພາບແວດລ້ອມດຽວກັນກັບຄົນອື່ນໄດ້ ແລະ ສຳລັບຜູ້ທີ່ມີອາການພູມແພ້ອາກາດມີວິທີປ້ອງກັນບໍ່ໃຫອາການເກີດຂຶ້ນມີດັ່ງນີ້:

- ໃນຜ້າປິດປາກແບບໃຊ້ເທື່ອດຽວຫຼືແບບອື່ນໆເມື່ອຕ້ອງອອກໄປນອກເພື່ອຫຼຸດການສູດດົມເອົາລະອອງເກສອນ, ຝຸ່ນ ແລະ ຂົນສັດ;
- ຫຼີກລ່ຽງການສຳຜັດສັດທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ສັດລ້ຽງຂອງຄົນອື່ນ;
- ລ້າງມືດ້ວຍສະບູ ຫຼື ເຈວລ້າງມື;
- ອານາໄມເຮືອນຫຼືສິ່ງຂອງຕ່າງໆທີ່ໃຊ້ເປັນປະຈຳ ເຊັ່ນ: ຜ້າຫົ່ມ, ຜ້າພົມ...

**www.thairath.co.th**



## ອາດ ກະວີລາວ

# ລົດ

# ໄມ ແສງມະນີ

❊ ມີລົດລາງແລ່ນໃຊ້
ຊີຫັນໄປທາງໃດ
ແວ່ຂຶ້ນເໜືອລົງໃຕ້
ຊຸມເພື່ອນທັງພີ່ນ້ອງ

ໃຈຊື່ນທຸກຄືນວັນ ພີ່ນ້ອງເອີຍ!
ວ່ອງໄວຈິງແທ້
ໄປເຢືອນຢາມແວ່
ຕາມໃຈມຸ້ງບ່ອນໝາຍ

❊ ການໄປມາຫຍັບຍ້າຍ
ຫາກຍາມກິນມຶນເມົາ
ໃຈຢ່າຂຶງແຂງກ້າ
ຫາກອຸບັດເຫດເກີດຂຶ້ນ

ລົດເຄື່ອນເຕືອນລະວັງ ແດ່ເນີ!
ມ່ວນມັນມະໂນແມ້ງ
ອວດສະຫາວບິດເລັ່ງ
ເສຍໃຈທ້າຍເມື່ອລຸນ ແທ້ໃດ!

❊ ການໄປ-ມາທຸກຄັ້ງ
ມີສະຕິລະວັງຕົວ
ເຄົາລົບກົດວາງໄວ້
ກັນໄວ້ດີກວ່າແກ້

ລະວັງເມື່ອສັນຈອນ
ປອດໄພຈິງແທ້
ເຖິງຈຸດໝາຍບ່ອນກຳນົດ
ຫາກເປັນແທ້ແກ້ບໍ່ທັນ ເພິ່ນວ່າ!

❊ ຢ່າໄດ້ປະໝາດທ້ອນ
ຢ້ານວ່າສູນເສຍຫລັກ
ເຖິງຄາວຊວຍເສຍຊ້ຳ
ຄິດກ່ອນຕິດສະຕາສນັ້ນ

ຍາມຂັບເຄື່ອນພາຫະນະ
ໂດດລົງເຫວຫ້ວຍ
ຊັບສິນທັງຊີວິດ
ຊີວີເຈົ້າຊິປອດໄພ

❊ ມີລົດຄັນຊ່າງໃຊ້
ຫາກກາຍ-ໃຈວູ່ວາມ
ຊິໄດ້ຄອຍເປັນຜີເຝົ້າ
ຊ້າຫ້ານາທີ ມີສະຕິອີກພ້ອມ

ຄຸນປະໂຫຍດຫຼວງຫຼາຍ
ເລັ່ງໄວເກີນຮ້ອຍ
ແຈຖະໜົນໃຫ້ຄົນຊ່າ
ມີສຸກໄດ້ດັ່ງປະສົງ ແທ້ໃດ!



## ຜັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 9** ຂອງສະພາແຫ່ງຊາດ **ຊຸດທີ IX** ພວມດຶກຄື້ນ ໃນຊ່ວງ**ວາລະຂອງກົດໝາຍ** ທັງປັບປຸງ ແລະ ສ້າງໃໝ່ ສສຊ ທຸກທ່ານໄດ້ ສຸມໃສ່ກຳລັງແຮງ ກາຍໃຈທັງຄວາມຄິດ ປະກອບຄຳເຫັນໃຫ້ກົດໝາຍສົມບູນແທ້ນ ຮັດກຸມສະເໜີຜ່ານ ມີເນື້ອໃນແຈ່ມແຈ້ງ ຜັນຂະຫຍາຍໄດ້ທໍ່ປະຊາ **ບັ້ນແລ້ວ! (ຊົມເຊີຍ)**

❊ **ຕາມ**ຂ່າວໃຫ້ຮູ້ **16 ມິຖຸນາ**ນີ້ **ທະນາຄານ**ແຫ່ງ ສປປລາວ ໄດ້ອອກ**ແຈ້ງການເຕືອນ**ປະຊາຊົນ ເພີ່ມທະວີລະວັງ**ເງິນໃບ 50 ພັນປອມ ລຸ້ນປີ 2024** ຂໍໃຫ້ພົງພີ່ນ້ອງເອົາໃຈໃສ່ລະວັງ ຟັງຄຳເຕືອນບອກ ໝັ່ນກວດສອບຍາມໃຊ້ ຈັບຈ່າຍຂອງເລືອກຊື້ ແຍງແລເຫັນຄວາມຕ່າງ ຈັ່ງຊິບໍ່ພາໂຕຊົມເສົ້າ ຍາມເຈົ້າຮູ້ວ່າເງິນປອມ **ບັ້ນບ່າ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ຂອງຂວັນວັນເກີດ

**ເມຍ:** ພໍ່ເອີຍ... ມື້ຄືນຂ້ອຍຝັນວ່າເຈົ້າຊື້ສາຍຄໍຄຳເສັ້ນບັກໃຫຍ່ໃຫ້ຂ້ອຍເປັນຂອງຂວັນວັນເກີດ, ເຈົ້າຮູ້ບໍ່ ມັນແປວ່າຫຍັງ?

ຜູ້ເປັນພໍ່ຈຶ່ງຍິ້ມໃຫ້ຜູ້ເປັນເມຍ ແລ້ວຕອບໄປວ່າ: ໃວເຄຕອບແລງແລ້ວເຈົ້າຫາກຊິຮູ້ເອງ

ຕອນແລງມາຜູ້ເປັນພໍ່ກັບເຮືອນພ້ອມກັບກ່ອງຂອງຂວັນສີແດງກ່ອງໜຶ່ງ, ຜູ້ເປັນເມຍຈຶ່ງຮີບຟ້າວແກະຂອງຂວັນດ້ວຍຄວາມຕື່ນເຕັ້ນດີໃຈ ກ່ອນຈະພົບວ່າທາງໃນເປັນປຶ້ມຫົວໜຶ່ງທີ່ມີຊື່ວ່າ:

"ໜັງສືຄູ່ມືທຳນາຍຝັນ"



## ຄະຕິເຕືອນໃຈ

# ດອກຫຍ້າ

ຈົບຕ້ອງຮູ້ຈັກເກັບ
ກະທຳຕ້ອງຮູ້ຈັກຄິດ
ເສຍໃຈຕ້ອງຮູ້ຈັກ

ເຈັບຕ້ອງຮູ້ຈັກຈຳ
ສະໜິດຕ້ອງຮູ້ຈັກເກງໃຈ
ໃຫ້ອະໄພໂຕເອງ

ລັດຖະສະພາຕ່າງປະເທດ

# ຫວຽດນາມ ຜ່ອນຄາຍນະໂຍບາຍ ລູກສອງຄົນ ທ່າມກາງອັດຕາການເກີດຫຼຸດລົງ

(Xinhua)-ວັນອັງຄານ ທີ3 ມິຖຸນາຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ອະນຸມັດການປັບປຸງກົດໝາຍວ່າດ້ວຍປະຊາກອນ ໂດຍຍົກເລີກລະບຽບການທີ່ຈຳກັດໃຫ້ຄອບຄົວມີລູກໄດ້ພຽງໜຶ່ງຫຼືສອງຄົນ; ພາຍໃຕ້ກົດໝາຍສະບັບປັບປຸງ, ຄູ່ສົມລົດມີອິດສະຫຼະໃນການຕັດສິນໃຈກ່ຽວກັບຈຳນວນລູກທີ່ພວກເຂົາຕ້ອງການມີ, ເວລາທີ່ຈະເກີດລູກ ແລະ ໄລຍະຫ່າງລະຫວ່າງການເກີດ.

ການປ່ຽນແປງນະໂຍບາຍດັ່ງກ່າວ ແນໃສ່ຮັກສາອັດຕາການຈະເລີນພັນ (fertility) ຢູ່ໃນລະດັບທົດແທນ ແລະ ແກ້ໄຂບັນຫາອັດຕາການເກີດທີ່ຫຼຸດລົງຢ່າງຕໍ່ເນື່ອງທົ່ວປະເທດ.

ຕາມລາຍງານຂອງກະຊວງສາທາລະນະສຸກ, ອັດຕາການຈະເລີນພັນໂດຍລວມຂອງຫວຽດນາມ ໄດ້ຫຼຸດລົງເປັນສະຖິຕິຕໍ່າສຸດ ທີ່ 1.91 ຄົນຕໍ່ແມ່ຍິງ 1 ຄົນ ໃນປີ 2024 ຕໍ່າກວ່າລະດັບທົດແທນທີ່ 2.1.



# ຜູ້ນຳລັດ Samoa ປະກາດຍຸບສະພາ

(Xinhua) - ຕຸຍມາເລອາລີຟາໂນ ວາອາເລໂຕອາ ຊົວເລົາວິທີII (Tuimalealiifano Vaaletoa Sualauvi II) ປະມຸກແຫ່ງລັດຊາມົວ ໄດ້ລົງນາມໃນຖະແຫຼງການເພື່ອຍຸບສະພານິຕິບັນຍັດ ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 3 ມິຖຸນາ 2025.

ວັນພຸດທີ 28 ພຶດສະພາຜ່ານມາ, ຕຸຍມາເລອາລີຟາໂນ ຖະແຫຼງວ່າ ເຂົາໄດ້ຕັດສິນໃຈຍຸບສະພາໂດຍອີງຕາມລັດຖະທຳມະນູນຂອງຊາມົວ ຕາມຄຳຮຽກຮ້ອງ ແລະ ຄຳແນະນຳຂອງນາຍົກລັດຖະມົນຕີ ຟີອາເມ ນາໂອມິ ມາຕາອາຟາ (Fiame Naomi Mataafa).



ຖະແຫຼງການກ່າວວ່າ "ເນື່ອງຈາກຄະນະລັດຖະມົນຕີບໍ່ສາມາດຜ່ານຮ່າງງົບປະມານສົກປີ 2025/2026 ໃນການຜ່ານວາລະທຳອິດໃນສະພານິຕິບັນຍັດ, ນາຍົກລັດຖະມົນຕີຈຶ່ງໄດ້ຕັດສິນໃຈວ່າຈະຕັ້ງຄຳຖາມກ່ຽວກັບຄວາມໄວ້ວາງໃຈຕໍ່ຄະນະລັດຖະມົນຕີຂອງນາງ".

ເມື່ອເລີ່ມມີການຍຸບສະພາ, ນາຍົກລັດຖະມົນຕີ ແລະ ຄະນະລັດຖະມົນຕີ ຍັງສືບຕໍ່ມີອຳນາດໃນການສັ່ງການທົ່ວໄປແລະຄວບຄຸມຝ່າຍບໍລິຫານຂອງຊາມົວ ໃນຖານະຮັກສາການ ຈົນກວ່າກອງປະຊຸມສະພານິຕິບັນຍັດຄັ້ງທຳອິດຫຼັງຈາກການຍຸບ; ຕາມຄຳຖະແຫຼງການ.

ຈະຕ້ອງມີການປະກາດການເລືອກຕັ້ງພາຍໃນ 90 ວັນ ຕາມລັດຖະທຳມະນູນ.

ຊາມົວ ມີກຳນົດຈະຈັດການເລືອກຕັ້ງໃນເດືອນເມສາປີໜ້າ.



NOTICE OF DISSOLUTION OF THE LEGISLATIVE ASSEMBLY 2025

**I, TUIMALEALIIFANO VAALETOA SUALAUVI II**, Head of State of Samoa, acting on the Prime Minister's request and advice dated 27 May 2025 and pursuant to Article 33(2) (b) and 63(3) of the Constitution of the Independent State of Samoa 1960, **HEREBY DISSOLVE** the Legislative Assembly on:

**3 June 2025**

due to the Cabinet's inability to pass the Appropriation Bill 2025/2026 in its first reading stage in the Legislative Assembly. A question that was determined by the Prime Minister to be a question of confidence in her Cabinet.

At the commencement of the dissolution, the Prime Minister and Cabinet continues to have the general direction and control of the executive government of Samoa in a caretaker capacity, until the first session of the Legislative Assembly following dissolution.

**GIVEN** under my hand on this.....28th...... day of ...MAY...... 2025.

(Tuimalealiifano Vaaletoa Sualauvi II)
**HEAD OF STATE**

# ຊາວເມັກຊິກັນ ໄປໃຊ້ສິດເລືອກຕັ້ງຕຸລາການຄັ້ງທຳອິດ




(Xinhua)-ວັນອາທິດ ທີ 1 ມິຖຸນາຜ່ານມາ, ຊາວເມັກຊິກັນ ໄດ້ໄປປ່ອນບັດເພື່ອລົງຄະແນນສຽງໃນການເລືອກຕັ້ງສະມາຊິກຝ່າຍຕຸລາການເປັນຄັ້ງທຳອິດຂອງປະເທດ, ຕັ້ງແຕ່ສານສູງສຸດຂອງລັດຖະບານກາງ ຈົນຮອດສານທ້ອງຖິ່ນ.

ອີງຕາມຂໍ້ມູນຂອງສະຖາບັນການເລືອກຕັ້ງແຫ່ງຊາດ, ຊາວເມັກຊິກັນ ໄດ້ໃຊ້ສິດເລືອກຕັ້ງ 881 ຕຳແໜ່ງຕຸລາການຂັ້ນປະເທດ ແລະ ລະດັບທ້ອງຖິ່ນ ລວມທັງຜູ້ພິພາກສາ 9 ຄົນ ຂອງສານຍຸຕິທຳສູງສຸດແຫ່ງຊາດ.

ສຳນັກຂ່າວ AFP ລາຍງານວ່າ, ລັດຖະບານເມັກຊິກ ກ່າວວ່າ ການປະຕິຮູບນີ້ ເຮັດໃຫ້ເມັກຊິກເປັນປະເທດທຳອິດ ແລະ ເປັນປະເທດດຽວໃນໂລກ ທີ່ເລືອກເອົາຜູ້ພິພາກສາທັງໝົດດ້ວຍຄະແນນສຽງນິຍົມ.

# Francis Scarpaleggia ຖືກເລືອກ ເປັນປະທານສະພາຕໍ່າການາດາ



(Xinhua) - ຟຣານຊິສ ສະກາຣ໌ປາເລກເຈຍ ສະມາຊິກສະພາຈາກພັກເສລີນິຍົມຂອງການາດາ ໄດ້ຮັບການເລືອກຕັ້ງເປັນປະທານສະພາສາມັນ ຫຼື ສະພາຕໍ່າ ຄົນທີ 39 ເມື່ອວັນທີ 26 ພຶດສະພາຜ່ານມາ ໂດຍບັນດາສະມາຊິກສະພາທີ່ຫາກໍໄດ້ຮັບການເລືອກຕັ້ງໃໝ່ ໄດ້ກັບມາດຳລົງຕຳແໜ່ງອີກຄັ້ງ ຫຼັງຈາກໄດ້ຢຸດພັກເປັນເວລາ 5 ເດືອນ ເພື່ອເລືອກຜູ້ນຳພັກເສລີນິຍົມຜູ້ໃໝ່ ແລະ ຈັດການເລືອກຕັ້ງທົ່ວໄປ.

ສະກາຣ໌ປາເລກເຈຍ ທີ່ເກີດໃນວັນທີ 6 ມິຖຸນາ 1957 ເປັນຕົວແທນຂອງເຂດເລືອກຕັ້ງແລັກ-ແຊັງ-ຫຼຸຍ (Lac-Saint-Louis) ໃນແຂວງຄວິເບກ (Quebec), ເຂົາໄດ້ຮັບເລືອກຕັ້ງເປັນສະມາຊິກສະພາຕໍ່າຄັ້ງທຳອິດໃນການເລືອກຕັ້ງແຫ່ງຊາດ ປີ 2004 ແລະ ໄດ້ຮັບເລືອກຕັ້ງຄືນໃໝ່ຕິດຕໍ່ກັນເຖິງ 7 ສະໄໝ.

ປະທານສະພາຕໍ່າ ໄດ້ຮັບການເລືອກຕັ້ງໂດຍສະມາຊິກສະພາຜ່ານການລົງຄະແນນສຽງປິດລັບ, ປະຕິບັດໜ້າທີ່ຄວບຄຸມກອງປະຊຸມ ແລະ ການດຳເນີນການຂອງສະພາ, ຮັກສາຄວາມເປັນລະບຽບຮຽບຮ້ອຍແລະມາລະຍາດໃນຫ້ອງປະຊຸມ, ຕີຄວາມກົດລະບຽບຢ່າງເປັນກາງ, ແລະ ປົກປ້ອງສິດ ແລະ ອະພິສິດຂອງສະມາຊິກ; ປະທານສະພາຕໍ່າຍັງປະຕິບັດໜ້າທີ່ກວດກາການບໍລິຫານງານຂອງສະພາສາມັນ, ເຮັດໜ້າທີ່ເປັນໂຄສົກໃນການພົວພັນກັບສະພາສູງ, ລັດຖະບານ ແລະ ອົງການອື່ນນອກລັດຖະສະພາ, ແລະປະຕິບັດໜ້າທີ່ທາງການທູດ ແລະ ພິທີການຕ່າງໆ.

ພັກເສລີນິຍົມ ຊະນະການເລືອກຕັ້ງເມື່ອເດືອນເມສາຜ່ານມາ ໂດຍໄດ້ 169 ຈາກທັງໝົດ 343 ທີ່ນັ່ງໃນສະພາຕໍ່າ, ສ່ວນພັກອະນຸລັກນິຍົມ ຍັງຄົງເປັນຝ່າຍຄ້ານຢ່າງເປັນທາງການ ໂດຍມີ 143 ທີ່ນັ່ງ.

# ສະພາຕ່ຳຍີ່ປຸ່ນ ຜ່ານຮ່າງກົດໝາຍຫ້າມຄາສິໂນອອນລາຍ




(Xinhua)-ວັນອັງຄານທີ 3 ມິຖຸນາຜ່ານມາ, ສະພາຜູ້ແທນລາສະດອນຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍທີ່ຈະສັ່ງຫ້າມເປີດ ແລະ ດຳເນີນງານເວັບໄຊຄາສິໂນອອນລາຍໃນປະເທດ.

ສະພາຕ່ຳໄດ້ຜ່ານຮ່າງກົດໝາຍປັບປຸງກົດໝາຍຕ້ານການເສບຕິດການພະນັນດ້ວຍຄະແນນສຽງສ່ວນຫຼາຍ.

ການປັບປຸງດັ່ງກ່າວເຊິ່ງຫ້າມບໍ່ໃຫ້ເວັບໄຊຕ່າງໆ ແນະນຳຜູ້ໃຊ້ໄປຍັງເວັບໄຊຄາສິໂນ, ເກີດຂຶ້ນທ່າມກາງການເປີດເຜີຍຫຼ້າສຸດກ່ຽວກັບການນຳໃຊ້ຄາສິໂນເໝືອນຈິງ (virtual casino) ຂອງນັກກິລາແລະດາລາຫຼາຍຄົນ.

ຕາມການສຳຫຼວດຂອງຕຳຫຼວດທີ່ນຳອອກມາເຜີຍແຜ່ໃນເດືອນມີນາ, ຄາດວ່າຊາວຍີ່ປຸ່ນ 3.37 ລ້ານຄົນ ຫຼິ້ນການພະນັນທີ່ຄາສິໂນອອນລາຍ ໂດຍໃຊ້ເງິນປະມານ 1.24 ພັນຕື້ເຢນ (ປະມານ 8.7 ຕື້ໂດລາສະຫະລັດ) ຕໍ່ປີ.

ການພະນັນເປັນສິ່ງຜິດກົດໝາຍໃນຍີ່ປຸ່ນ, ເຖິງແມ່ນວ່າຄາສິໂນອອນລາຍ ຈະເປີດໃຫ້ບໍລິການຢ່າງຖືກກົດໝາຍຢູ່ຕ່າງປະເທດກໍຕາມ.

ຄາດວ່າກົດໝາຍສະບັບປັບປຸງໃໝ່ນີ້ ຈະປະກາດໃຊ້ໃນລະຫວ່າງກອງປະຊຸມສະໄໝສາມັນປັດຈຸບັນຂອງລັດຖະສະພາ ເຊິ່ງດຳເນີນຮອດວັນທີ 22 ມິຖຸນານີ້.

# ພັນທະມິດລັດຖະບານເວເນຊູເອລາ ຊະນະເລືອກຕັ້ງລະດັບທ້ອງຖິ່ນ ແລະ ສະພາແຫ່ງຊາດ

(Xinhua) - ຄະນະກຳມະການເລືອກຕັ້ງແຫ່ງຊາດ (National Electoral Council - CNE) ເປີດເຜີຍເມື່ອວັນອັງຄານທີ 27 ພຶດສະພາຜ່ານມາວ່າ ເສົາຄ້ຳແຫ່ງຄວາມຮັກຊາດທີ່ຍິ່ງໃຫຍ່ (Great Patriotic Pole) ລັດຖະບານປະສົມຂອງເວເນຊູເອລາ ໄດ້ຮັບຄະແນນສຽງຫຼາຍກວ່າ 83% ໃນການເລືອກຕັ້ງລະດັບທ້ອງຖິ່ນ ແລະ ສະພາແຫ່ງຊາດທີ່ຈັດຂຶ້ນເມື່ອວັນອາທິດທີ 25 ພຶດສະພາ.

ຄາຣ໌ລອສ ຄິນເຕໂຣ (Carlos Quintero) ຮອງປະທານ CNE ກ່າວວ່າ: ດ້ວຍການນັບບັດລົງຄະແນນສຽງເກືອບທັງໝົດ ແລະ ມີຜູ້ມາໃຊ້ສິດເລືອກຕັ້ງ 43%, ແນວຮ່ວມຝ່າຍລັດຖະບານ ໄດ້ຮັບຄະແນນ 5 ລ້ານສຽງ ກວມເອົາ 83.42% ຂອງຄະແນນສຽງທັງໝົດສຳລັບສະພາແຫ່ງຊາດ; ພັນທະມິດຝ່າຍຄ້ານຕາມຫຼັງມາສຸດຫ່າງ, ໂດຍພັນທະມິດປະຊາທິປະໄຕ ໄດ້ 6% ແລະ ພັນທະມິດ UNTC-Unica ໄດ້ 5%.

ໃນດ້ານທີ່ນັ່ງ, ກຸ່ມລັດຖະບານ ໄດ້ 253 ຈາກ 267 ທີ່ນັ່ງ ໃນສະພາແຫ່ງຊາດຊຸດໃໝ່; ພັກຮ່ວມລັດຖະບານ ຍັງຊະນະການເລືອກຕັ້ງເຈົ້າແຂວງໄດ້ 23 ຈາກທັງໝົດ 24 ແຂວງ ແລະ 235 ໃນຈຳນວນ 260 ທີ່ນັ່ງ ໃນສະພາລະດັບທ້ອງຖິ່ນ.

ໃນລະຫວ່າງພິທີປະກາດຜົນ, ຄິນເຕໂຣ ໄດ້ຊົມເຊີຍການລົງຄະແນນສຽງຄັ້ງນີ້ວ່າ ຍຸຕິທຳ ແລະ ປະຊາທິປະໄຕ, ແລະ ຮຽກຮ້ອງບັນດາສະມາຊິກສະພາຊຸດໃໝ່ ໃຫ້ກຽດແກ່ຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນ ດ້ວຍ "ການບໍລິການ ແລະ ການເຮັດວຽກທີ່ຊື່ສັດ".



# Ecuador ອະນຸມັດປັບປຸງລັດຖະທຳມະນູນ ເພື່ອອະນຸຍາດໃຫ້ມີຖານທັບຕ່າງຊາດ



(Xinhua) - ວັນອັງຄານທີ 3 ມິຖຸນາຜ່ານມາ, ສະພາແຫ່ງຊາດເອກວາດໍ ໄດ້ອະນຸມັດການປັບປຸງລັດຖະທຳມະນູນທີ່ຈະອະນຸຍາດໃຫ້ຕັ້ງຖານທັບທະຫານຕ່າງຊາດໃນປະເທດ, ເຊິ່ງເປັນການເຄື່ອນໄຫວທີ່ສະເໜີໂດຍປະທານາທິບໍດີ ດານຽວ ໂນໂບອາ (Daniel Noboa) ເພື່ອຊຸກຍູ້ການຮ່ວມມືສາກົນໃນການຕ້ານອາຊະຍາກຳຂ້າມຊາດ.

ຮ່າງກົດໝາຍດັ່ງກ່າວໄດ້ຜ່ານການລົງຄະແນນສຽງຄັ້ງສຸດທ້າຍ ດ້ວຍຄະແນນເຫັນດີ 82 ສຽງ ໂດຍໄດ້ຮັບການສະໜັບສະໜູນຈາກກຸ່ມການເຄື່ອນໄຫວປະຊາທິປະໄຕແຫ່ງຊາດທີ່ເປັນພັກລັດຖະບານຂອງ ໂນໂບອາ ແລະ ບັນດາພັນທະມິດ; ເພື່ອໃຫ້ມີຜົນບັງຄັບໃຊ້, ການປັບປຸງລັດຖະທຳມະນູນ ຈະຕ້ອງໄດ້ຮັບການອະນຸມັດຈາກປະຊາຊົນໃນການລົງປະຊາມະຕິທົ່ວປະເທດ, ຕາມທີ່ກຳນົດໄວ້ສຳລັບການປັບປຸງລັດຖະທຳມະນູນບາງສ່ວນ.

ສະພາແຫ່ງຊາດກ່າວໃນຖະແຫຼງການວ່າ: ການປະຕິຮູບຄັ້ງນີ້ ຈະເປີດທາງໃຫ້ມີບັນດາຖານທັບທະຫານຕ່າງຊາດແລະເພີ່ມທະວີຄວາມໝັ້ນຄົງແຫ່ງຊາດ ໂດຍຜ່ານການຮ່ວມມືທາງຍຸດທະສາດ, ການແບ່ງປັນຂ່າວລັບ ແລະ ການຖ່າຍທອດເຕັກໂນໂລຊີ.

ໂນໂບອາ ໄດ້ຍື່ນຂໍ້ສະເໜີໃນເດືອນຕຸລາ 2024 ແນໃສ່ປັບປຸງມາດຕາ 5 ຂອງລັດຖະທຳມະນູນ, ເຊິ່ງປັດຈຸບັນໄດ້ຫ້າມບັນດາຖານທັບທະຫານຕ່າງຊາດ ຫຼື ສະຖານທີ່ທີ່ມີພາລະກິດທາງທະຫານ ຢູ່ດິນແດນເອກວາດໍ.

ການເຄື່ອນໄຫວດັ່ງກ່າວເກີດຂຶ້ນທ່າມກາງວິກິດການດ້ານຄວາມໝັ້ນຄົງທີ່ເພີ່ມທະວີຄວາມຮຸນແຮງຂຶ້ນ; ໃນເດືອນມັງກອນ 2024, ລັດຖະບານໄດ້ປະກາດ "ການປະທະກັນດ້ວຍອາວຸດພາຍໃນ" (internal armed conflict) ກັບກຸ່ມອາຊະຍາກອນທີ່ຕົນໄດ້ກຳນົດວ່າເປັນພວກກໍ່ການຮ້າຍ.

ໃນລະຫວ່າງການອະພິປາຍ, ນາຕາລີ ໂມຣິລໂລ (Nataly Morillo) ສະມາຊິກສະພາແຫ່ງຊາດຈາກພັກລັດຖະບານ ກ່າວວ່າ ການປະຕິຮູບມີຄວາມສຳຄັນຢ່າງຍິ່ງເພື່ອແກ້ໄຂບັນຫາອາຊະຍາກຳທີ່ມີການຈັດຕັ້ງ, ການຄ້າຂາຍຢາເສບຕິດ, ການຂຸດຄົ້ນບໍ່ແຮ່ທີ່ຜິດກົດໝາຍ, ການລັກລອບຂົນອາວຸດ ແລະ ການຄ້າມະນຸດ ໂດຍນາງເນັ້ນໜັກວ່າ ເອກວາດໍ ຂາດຄວາມສາມາດໃນການຕໍ່ສູ້ກັບໄພຂົ່ມຂູ່ເຫຼົ່ານີ້ພຽງຜູ້ດຽວ.

ອີງຕາມຕົວເລກຢ່າງເປັນທາງການ, ເອກວາດໍ ໄດ້ພົບເຫັນຄວາມຮຸນແຮງເພີ່ມຂຶ້ນໃນໄລຍະ 4 ເດືອນຕົ້ນປີ 2025 ໂດຍມີລາຍງານການຄາດຕະກຳຫຼາຍກວ່າ 3,000 ກໍລະນີ.




*#ບ່າວກະບື*

**ເມື່ອ**ຝ່າຍບາງເມຍໂດດໜີປະ, ທ່ານໃບເຕີຍບໍ່ສາມາດຫຼັບຕາບອນໄດ້ ເພາະບາງເມຍຍົກເອົາຕຽງໄປພ້ອມ.

*#BAOKBU*

When Mr. Bay Teuy's wife left him he couldn't sleep. She took the bed.

## ຕາມພາສາ ກາຕູນ



ຈອດລົດກາງທາງ ສະບາຍໂຕເອງ ລຳບາກເພື່ອນຮ່ວມທາງ

● ໂດຍ : ພູຜາ

# ເພື່ອສິດ ແລະ ຜົນປະໂຫຍດຂອງເດັກ

❖ ວິເສດ ສະແຫວງສຶກສາ

ໃນບັນຍາກາດທີ່ປິ່ນອ້ອມການສະເຫຼີມສະຫຼອງວັນເດັກນ້ອຍສາກົນ (1 ມິຖຸນາ) ປະຈຳປີນີ້, ຜູ້ຂຽນມີເລື່ອງທີ່ໜ້າສົນໃຈກ່ຽວກັບບັນຫາທີ່ພົວພັນກັບເດັກນ້ອຍຢູ່ບາງປະເທດມາເວົ້າໃຫ້ຟັງ. ເລື່ອງທີໜຶ່ງແມ່ນຂ່າວກ່ຽວກັບການອອກກົດໝາຍປົກປ້ອງເດັກນ້ອຍຢູ່ຍີ່ປຸ່ນ (ໜັງສືພິມປະເທດລາວ 27/3/2019) ທີ່ບອກວ່າລັດຖະບານຍີ່ປຸ່ນ ເຫັນດີຕໍ່ຮ່າງກົດໝາຍສະບັບປັບປຸງທີ່ກຳນົດຫ້າມຜູ້ເປັນພໍ່ແມ່ລົງໂທດທາງຮ່າງກາຍຕໍ່ເດັກນ້ອຍ, ຂ່າວບອກວ່າໃນຊຸມປີກ່ອນໜ້ານັ້ນເຫດການໃຊ້ຄວາມຮຸນແຮງທາງຮ່າງກາຍຕໍ່ເດັກທີ່ເປັນລູກ ໂດຍຜູ້ເປັນພໍ່ແມ່ນັ້ນໄດ້ເພີ່ມຄວາມຮຸນແຮງຂຶ້ນເຖິງຂັ້ນມີການເສຍຊີວິດຍ້ອນຢ່າງໜ້າສັງສານ; ກົດໝາຍສະບັບປັບປຸງ ໄດ້ກຳນົດຫ້າມພໍ່ແມ່, ຜູ້ປົກຄອງ ກໍຄືເຈົ້າໜ້າທີ່ສະຫວັດດີການ (ຕາມສູນເບິ່ງແຍງເດັກ) ລົງໂທດທາງຮ່າງກາຍຕໍ່ເດັກ ບໍ່ວ່າຈະອ້າງວ່າເປັນການລົງໂທດເພື່ອອົບຮົມສັ່ງສອນກໍຕາມ. ທ່ານ ຊິນໂຊະ ອາເບະ ນາຍົກລັດຖະມົນຕີຍີ່ປຸ່ນ ໃນເວລານັ້ນ ໄດ້ກ່າວຕໍ່ກອງປະຊຸມສະພາວ່າ ຜູ້ໃຫຍ່ທຸກຄົນຕ້ອງມີຄວາມຮັບຜິດຊອບໃນການປົກປ້ອງຊີວິດຂອງເດັກນ້ອຍ, ລັດຖະບານຈະດຳເນີນການຢ່າງວ່ອງໄວ ແລະ ເດັດຂາດ ເພື່ອບໍ່ໃຫ້ມີເຫດການໃຊ້ຄວາມຮຸນແຮງຕໍ່ເດັກ. ກົດໝາຍສະບັບປັບປຸງນີ້ ກຳນົດໃຫ້ມີທະນາຍຄວາມ ແລະ ແພດຢູ່ປະຈຳ ໃນບັນດາສູນສະຫວັດດີການສຳລັບເດັກ ເພື່ອໃຫ້ຄວາມຊ່ວຍເຫຼືອທາງການແພດ ແລະ ກົດໝາຍ; ນອກຈາກນັ້ນ, ກົດໝາຍຍັງໄດ້ເປີດກວ້າງການບໍລິການສູນໃຫ້ຄຳປຶກສາ ແລະ ອື່ນໆ ທີ່ພົວພັນກັບບັນຫາທີ່ແຕະຕ້ອງສິດຜົນປະໂຫຍດ ແລະ ຄວາມປອດໄພດ້ານຊີວິດ ແລະ ຮ່າງກາຍຂອງເດັກນ້ອຍ.

ຕໍ່ໄປແມ່ນສອງເຫດການທີ່ກາຍເປັນຂ່າວໃຫຍ່ຢູ່ປະເທດມາເລເຊຍ. ເລື່ອງທີໜຶ່ງແມ່ນກ່ຽວກັບຄູວິຊາເລກ ປະຈຳຫ້ອງ ປ3 ກາຍເປັນຈຳເລີຍຍ້ອນໄດ້ໃຊ້ຄວາມຮຸນແຮງຕໍ່ເດັກຍິງຄົນໜຶ່ງ ດ້ວຍການບິດຫູເຫຍື່ອ ໃນວັນທີ 16 ມິຖຸນາ 2016, ຂ່າວບໍ່ໄດ້ບອກວ່າຄູບິດຫູນັກຮຽນຍ້ອນຫຍັງ ແຕ່ທີ່ແນ່ໆ ກໍຄືຄູຄົນນັ້ນໄດ້ຖືກສານຕັດສິນໃນວັນທີ 16 ມິຖຸນາ 2016 ວ່າມີຄວາມຜິດທາງອາຍາ, ແຕ່ຂ່າວບໍ່ໄດ້ບອກວ່າໄດ້ຮັບໂທດໜັກເບົາເທົ່າໃດ; ຄູໜຸ່ມອາຍຸ 27 ປີຄົນນີ້ ໄດ້ຮັບການປະກັນຕົວໃນວົງເງິນ 500 ຣິງກິດ. ການໃຊ້ຄວາມຮຸນແຮງທາງຮ່າງກາຍຕໍ່ຄົນອື່ນລວມທັງການບິດຫູ ແມ່ນໂທດທາງອາຍາ ທີ່ກຳນົດຢູ່ໝວດທີ323ຂອງກົດໝາຍອາຍາມາເລເຊຍ. ອີກເຫດການໜຶ່ງທີ່ເກີດຂຶ້ນຢູ່ປະເທດມາເລເຊຍເຊັ່ນກັນນັ້ນ ກໍຄືທາງກະຊວງສຶກສາຂອງປະເທດນີ້ ໄດ້ພິຈາລະນາລະບົບການສິດສອນ ແລະ ການຮຽນ ທີ່ບໍ່ເຮັດໃຫ້ເດັກນັກຮຽນ (ປະຖົມ) ຕ້ອງໄດ້ຫິ້ວ-ຫອບປຶ້ມຕຳລາຮຽນຢ່າງຫຼວງຫຼາຍໄປໂຮງຮຽນ ເພາະເຫັນວ່າເປັນອັນຕະລາຍຕໍ່ສຸຂະພາບຂອງເດັກນ້ອຍ, ຢູ່ມາເລເຊຍກໍຄືຢູ່ຫຼາຍໆປະເທດເດັກນ້ອຍນັກຮຽນຕ້ອງໄດ້ຫິ້ວ-ຫອບປຶ້ມອ່ານປຶ້ມຕຳລາຮຽນຈຳນວນຫຼາຍເຫຼັ້ມໄປໂຮງຮຽນ ຍິ່ງຮຽນຢູ່ຊັ້ນສູງຂຶ້ນ ຈຳນວນປຶ້ມກໍເພີ່ມຂຶ້ນ; ໃນທີ່ສຸດ ບັນດາພໍ່ແມ່ ແລະ ຜູ້ປົກຄອງເດັກ ກໍໄດ້ຮ່ວມໃຈກັນຮຽກຮ້ອງໃຫ້ກະຊວງສຶກສາປັບປຸງລະບົບການຮຽນແບບໃໝ່ທີ່ບໍ່ເພິ່ງປຶ້ມຕຳລາຮຽນເກີນໄປ (ຂ່າວໜັງສືພິມລາວພັດທະນາ 5 ມິຖຸນາ 2018). ໃນທີ່ສຸດ, ທ່ານ ດຣ. ມັດຊາລີ ມາລິກ ລັດຖະມົນຕີກະຊວງສຶກສາໃນເວລານັ້ນ ກໍໄດ້ອອກມາເປີດເຜີຍວ່າທາງການກະຊວງສຶກສາ ໄດ້ຄົ້ນຄວ້າຄວາມເປັນໄປໄດ້ໃນການແກ້ໄຂບັນຫາຕາມການສະເໜີຂອງພໍ່ແມ່ຂອງເດັກນັກຮຽນ ໂດຍຈະປັບປຸງລະບົບການສອນການຮຽນ ໂດຍເນັ້ນການຊອກຄົ້ນຫາຄວາມຮູ້ທີ່ບໍ່ຕ້ອງອາໄສປຶ້ມຕຳລາໃນຫ້ອງຮຽນ. ທ່ານວ່ານີ້ຄືຮູບແບບທີ່ນຳໃຊ້ໃນບັນດາປະເທດທີ່ພັດທະນາທັງຫຼາຍ, ເປັນວິທີງ່າຍໆແລະປະຕິບັດໄດ້ໂດຍບໍ່ຈຳເປັນໃຊ້ງົບປະມານ ແຕ່ເອື້ອອຳນວຍຕໍ່ການຮຽນຮູ້ ແລະ ການສິດສອນ; ການຮຽນຮູ້ແບບຄົ້ນຫາຄວາມຮູ້, ເນັ້ນການຕັ້ງ ແລະ ແກ້ບັນຫາ, ການຮຽນເປັນກຸ່ມຮ່ວມກັນ, ການຄົ້ນຄວ້າຫາຄຳຕອບກ່ຽວກັບບັນຫາໃດໜຶ່ງດ້ານການສ້າງຕົວແບບ (Role Playing).

ທະນາຄານພັດທະນາລາວ
LDB Bank

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ.....010...../ປປທ
ນະຄອນຫຼວງວຽງຈັນ, ວັນທີ..23 ມັງກອນ 2025

## ລັດຖະດຳລັດ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 148/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ).
**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

---

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 148 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

## ມະຕິ
### ກອງປະຊຸມສະພາແຫ່ງຊາດ
### ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຕອນບ່າຍຂອງວັນທີ 5 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

